ພະຍາກອນ ອຽງຈັນ
23–31°C
ວັນສຸກ 06/11 · ເມກບາງສ່ວນ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນສຸກ 6 ພະຈິກ 2026 · ສະບັບທີ 016 | ສະຫຼຸບຂ່າວປະຈຳວັນພະຫັດ 5 ພະຈິກ 2026 · 24 ຂ່າວ | 18 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ສາລະໜ້າຮູ້** · 15:34 ໂມງ · ອ່ານ 77 ຄັ້ງ

ນອນຄົບ 8 ຊົ່ວໂມງແລ້ວ ແຕ່ຍັງຮູ້ສຶກອ່ອນເພຍ ເກີດຈາກຫຍັງໄດ້ແດ່? ມາເຊັກ 7 ສາເຫດທີ່ບໍ່ຄວນເບິ່ງຂ້າມ



ຫຼາຍຄົນພະຍາຍາມເຂົ້ານອນໃຫ້ກົງເວລາ ແລະ ນອນໃຫ້ຄົບ 8 ຊົ່ວໂມງທຸກຄືນ ແຕ່ເມື່ອຕື່ນນອນກັບ ຍັງຮູ້ສຶກອ່ອນເພຍ ບໍ່ສົດຊື່ນ ງ່ວງນອນໃນລະຫວ່າງວັນ ຫຼືບໍ່ມີແຮງເຮັດກິດຈະກຳຕ່າງໆ ຈົນເກີດຄຳຖາມສົງໄສວ່າ ເປັນຫຍັງຮ່າງກາຍຈຶ່ງພັກຜ່ອນບໍ່ພຽງພໍ ທັງທີ່ໃຊ້ເວລານອນຕາມທີ່ຫຼາຍຄົນແນະນຳແລ້ວ?

ຄວາມຈິງແລ້ວ ການນອນຫຼັບທີ່ດີບໍ່ໄດ້ຂຶ້ນກັບ ຈຳນວນຊົ່ວໂມງພຽງຢ່າງດຽວ ແຕ່ຍັງກ່ຽວຂ້ອງກັບ ຄຸນນະພາບການນອນ ຄວາມສະໝ່ຳສະເໝີຂອງເວລາ ເຂົ້ານອນ ແລະສຸຂະພາບໂດຍລວມອີກດ້ວຍ. ຫາກ

ຕໍ່ໜ້າ 2

◆ **ເຕັກໂນໂລຊີ** · 10:44 ໂມງ

ມີການກວດພົບສັນຍານວິທະຍຸ ປິດສະໜາຈາກທິດທາງ ລະບົບດາວ K2-155 ທີ່ຢູ່ຫ່າງຈາກໂລກ 238 ປີແສງ



ທີມນັກວິໄຈທີ່ນຳໃຊ້ຂໍ້ມູນຈາກກ້ອງໂທລະທັດວິທະຍຸ FAST ຂອງຈີນ ກວດພົບສັນຍານວິທະຍຸທີ່ຜິດປົກກະຕິ ຈາກທິດທາງຂອງລະບົບດາວ K2-155 ເຊິ່ງຢູ່ຫ່າງຈາກໂລກ ປະມານ 238 ປີແສງ.

ພາບ: ສຳນັກຂ່າວຊິນຫົວ

ສັນຍານດັ່ງກ່າວຖືກກວດພົບໃນຂະນະທີ່ທີມວິໄຈ ກຳລັງທົດສອບໂປຣແກຣມຄອມພິວເຕີຊຸດໃໝ່ ກັບຂໍ້ມູນ ການສັງເກດການເກົ່າຂອງກ້ອງ FAST ເຊິ່ງເປັນກ້ອງໂທລະ ທັດວິທະຍຸແບບຈານຮັບສັນຍານດ່ຽວທີ່ໃຫຍ່ທີ່ສຸດໃນໂລກ.

ໂດຍສະເພາະ ລະບົບດາວ K2-155 ມີດາວເຄາະ

ຕໍ່ໜ້າ 3

ໃນສະບັບນີ້

2 ສາລະໜ້າຮູ້
4 ຂ່າວພາຍໃນ
8 ເຫດການ
10 ຂ່າວຕ່າງປະເທດ
16 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
17 ແຈ້ງການ
18 ທ້າຍສະບັບ



◆ **ແຈ້ງການ** · 09:07 ໂມງ

ແຈ້ງການມອດໄຟ ວັນທີ 6,7,8,13/11/2026


ອ່ານໜ້າ 17 ▸



◆ **ແຈ້ງການ** · 09:21 ໂມງ

ແຈ້ງປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ

ອ່ານໜ້າ 17 ▸



◆ **ເຫດການ** · 13:25 ໂມງ

ຫວາດສຽວ! ເຫດລົດໃຫຍ່ຢຽບກ້ອນຫີນ ຟ້ຳເຂົ້າຮ້ານຂາຍເຄື່...

ອ່ານໜ້າ 8 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ນອນຄົບ 8 ຊົ່ວໂມງແລ້ວ ແຕ່ຍັງຮູ້ສຶກອ່ອນເພຍ ເກີດຈາກຫຍັງໄ... (ຕໍ່ຈາກໜ້າ 1)

ນອນຄົບ 8 ຊົ່ວໂມງແຕ່ຍັງອ່ອນເພຍເປັນປະຈຳ ອາດມີປັດໄຈບາງຢ່າງລົບກວນການພັກຜ່ອນ ຫຼືອາດເປັນສັນຍານຂອງບັນຫາສຸຂະພາບທີ່ຄວນກວດຫາສາເຫດ.

ນອນຄົບ 8 ຊົ່ວໂມງແລ້ວ ເປັນຫຍັງຍັງຮູ້ສຶກອ່ອນເພຍ?

ໂດຍທົ່ວໄປ ຜູ້ໃຫຍ່ສ່ວນຫຼາຍຕ້ອງການເວລານອນປະມານ 7–9 ຊົ່ວໂມງຕໍ່ຄືນ ແຕ່ຄວາມຕ້ອງການຂອງແຕ່ລະຄົນອາດແຕກຕ່າງກັນ. ດັ່ງນັ້ນ ການນອນຄົບ 8 ຊົ່ວໂມງຈຶ່ງບໍ່ໄດ້ຮັບປະກັນວ່າຈະຕື່ນມາຮູ້ສຶກສົດຊື່ນສະເໝີໄປ ໂດຍສະເພາະເມື່ອການນອນຖືກລົບກວນ ຫຼືຮ່າງກາຍມີຄວາມຕ້ອງການພັກຜ່ອນຫຼາຍກວ່າປົກກະຕິ.

ນອກຈາກນີ້ ຄວນແຍກໃຫ້ອອກລະຫວ່າງອາການງ່ວງນອນກັບອາການອ່ອນເພຍ ເພາະອາການງ່ວງນອນແມ່ນຄວາມຮູ້ສຶກຢາກຫຼັບ ສ່ວນອາການອ່ອນເພຍອາດໝາຍເຖິງການຂາດພະລັງງານ ເມື່ອຍງ່າຍ ຫຼືຮູ້ສຶກບໍ່ມີແຮງ ເຖິງແມ່ນວ່າຈະບໍ່ຢາກນອນກໍຕາມ. ອາການທັງສອງຢ່າງນີ້ອາດເກີດຂຶ້ນພ້ອມກັນໄດ້ ແຕ່ໃນບາງກໍລະນີອາດມີສາເຫດແຕກຕ່າງກັນ.

7 ສາເຫດທີ່ອາດເຮັດໃຫ້ນອນຄົບ 8 ຊົ່ວໂມງແຕ່ຍັງອ່ອນເພຍ

1. ຄຸນນະພາບການນອນບໍ່ດີ ຫຼັບບໍ່ເລິກ ຫຼືຕື່ນເລື້ອຍໆ

ເຖິງວ່າຈະໃຊ້ເວລາຢູ່ເທິງຕຽງຄົບ 8 ຊົ່ວໂມງ ແຕ່ຫາກຕື່ນກາງດຶກຫຼາຍຄັ້ງ ຫຼັບໆ ຕື່ນໆ ຫຼືໃຊ້ເວລາດົນກວ່າຈະກັບໄປຫຼັບໄດ້ ການພັກຜ່ອນກໍອາດບໍ່ມີປະສິດທິພາບເທົ່າທີ່ຄວນ ສົ່ງຜົນໃຫ້ຕື່ນມາບໍ່ສົດຊື່ນ ແລະຮູ້ສຶກງ່ວງນອນໃນລະຫວ່າງວັນ.

ສາເຫດທີ່ລົບກວນການນອນອາດມາຈາກສຽງລົບກວນ ອຸນຫະພູມຫ້ອງທີ່ບໍ່ເໝາະສົມ ຄວາມຄຽດ ອາການເຈັບປວດ ຫຼືການດື່ມເຄື່ອງດື່ມທີ່ມີຄາເຟອີນໃກ້ເວລາເຂົ້ານອນ. ຫາກເກີດຂຶ້ນເລື້ອຍໆ ຄວນສັງເກດວ່າມີປັດໄຈໃດທີ່ເຮັດໃຫ້ການນອນບໍ່ຕໍ່ເນື່ອງ.

2. ນອນຜິດເວລາ ນາລິກາຊີວິດບໍ່ສອດຄ່ອງກັບກິດຈະວັດປະຈຳວັນ

ຮ່າງກາຍມີນາລິກາຊີວິດ (Body Clock) ທີ່ຊ່ວຍຄວບຄຸມວົງຈອນການຫຼັບແລະການຕື່ນ. ຫາກເຂົ້ານອນແລະຕື່ນນອນບໍ່ເປັນເວລາ ຫຼືເຮັດວຽກເປັນກະ ອາດເຮັດໃຫ້ເວລານອນຕາມໂມງບໍ່ສອດຄ່ອງກັບຈັງຫວະການເຮັດວຽກຂອງຮ່າງກາຍ.

ຕົວຢ່າງ: ບາງຄົນເຂົ້ານອນດົກຫຼາຍ ແລະຕ້ອງຕື່ນແຕ່ເຊົ້າເພື່ອໄປເຮັດວຽກ ເຖິງຈະພະຍາຍາມຊົດເຊີຍດ້ວຍການນອນໃນເວລາອື່ນ ແຕ່ກໍອາດຍັງຮູ້ສຶກບໍ່ສົດຊື່ນ. ດັ່ງນັ້ນ ການຮັກສາເວລາເຂົ້ານອນແລະຕື່ນນອນໃຫ້ສະໝ່ຳສະເໝີ ຈຶ່ງເປັນສ່ວນສຳຄັນຂອງການດູແລຄຸນນະພາບການນອນ.

3. ພາວະຢຸດຫາຍໃຈຂະນະຫຼັບ

ພາວະຢຸດຫາຍໃຈຂະນະຫຼັບ (Sleep Apnea) ເປັນບັນຫາທີ່ອາດເຮັດໃຫ້ການນອນຖືກລົບກວນ ໂດຍທີ່ເຈົ້າຕົວອາດບໍ່ຮູ້ສຶກໂຕ. ຜູ້ທີ່ມີພາວະນີ້ອາດຫາຍໃຈຕິດຂັດ ຫຼືຢຸດຫາຍໃຈເປັນຊ່ວງໆ ໃນຂະນະນອນ ເຮັດໃຫ້ຮ່າງກາຍຕ້ອງຕື່ນ ຫຼືປ່ຽນລະດັບການຫຼັບຊ້ຳໆ ຈົນພັກຜ່ອນໄດ້ບໍ່ເຕັມທີ່.

ສັນຍານທີ່ຄວນສັງເກດ ມີດັ່ງນີ້:

ນອນກົນສຽງດັງ.

ມີຄົນສັງເກດເຫັນວ່າຢຸດຫາຍໃຈຂະນະນອນ.

ສະດຸ້ງຕື່ນພ້ອມກັບອາການຫອບ ຫຼືສຳລັກ.

ປວດຫົວຫຼັງຕື່ນນອນ.

ງ່ວງນອນຫຼາຍຜິດປົກກະຕິໃນຕອນກາງວັນ.

ຫາກມີອາການເຫຼົ່ານີ້ຮ່ວມກັນ ຄວນປຶກສາແພດເພື່ອປະເມີນວ່າຈຳເປັນຕ້ອງກວດການນອນຫຼັບຫຼືບໍ່.

4. ຄວາມຄຽດສະສົມ ຫຼືບັນຫາສຸຂະພາບຈິດ

ຄວາມຄຽດ ຄວາມກັງວົນ ແລະພາວະຊຶມເສົ້າ ອາດສົ່ງຜົນຕໍ່ຄຸນນະພາບການນອນ ແລະລະດັບພະລັງງານໃນລະຫວ່າງວັນ. ບາງຄົນອາດຫຼັບໄດ້ຕາມປົກກະຕິ ແຕ່ຕື່ນມາບໍ່ສົດຊື່ນ ຂະນະທີ່ບາງຄົນອາດຕື່ນກາງດຶກເລື້ອຍໆ ຫຼືຮູ້ສຶກໝົດແຮງຕະຫຼອດມື້.

ຫາກອາການອ່ອນເພຍເກີດຂຶ້ນພ້ອມກັບຄວາມຮູ້ສຶກເສົ້າ ເບື່ອໜ່າຍ ບໍ່ຢາກເຮັດກິດຈະກຳທີ່ເຄີຍມັກ ຫຼືມີບັນຫາດ້ານສະມາທິຢ່າງຕໍ່ເນື່ອງ ຄວນປຶກສາຜູ້ຊ່ຽວຊານເພື່ອປະເມີນສຸຂະພາບທັງດ້ານຮ່າງກາຍແລະຈິດໃຈ ບໍ່ຄວນສະຫຼຸບວ່າເກີດຈາກການພັກຜ່ອນບໍ່ພຽງພໍພຽງຢ່າງດຽວ.

5. ພາວະເລືອດຈາງ ຫຼືຂາດທາດເຫຼັກ

ພາວະເລືອດຈາງອາດເຮັດໃຫ້ຮ່າງກາຍໄດ້ຮັບອົກຊີແຊນໄປຫຼໍ່ລ້ຽງເນື້ອເຍື່ອຕ່າງໆ ຫຼຸດລົງ ສົ່ງຜົນໃຫ້ເມື່ອຍງ່າຍ ອ່ອນເພຍ ຫຼືຮູ້ສຶກບໍ່ມີແຮງ ເຖິງແມ່ນວ່າຈະນອນຫຼັບຢ່າງພຽງພໍແລ້ວກໍຕາມ.

ຜູ້ທີ່ມີພາວະຂາດທາດເຫຼັກອາດມີອາການຮ່ວມອື່ນໆ ເຊັ່ນ:

ວິນຫົວ ຫຼືໜ້າມືດ.

ໃຈສັ່ນ.

ຫາຍໃຈບໍ່ອີ່ມເມື່ອອອກແຮງ.

ຜິວໜັງຈືດຊີດ.

ຫາກມີອາການອ່ອນເພຍຕໍ່ເນື່ອງ ຄວນພົບແພດເພື່ອກວດເລືອດ ແລະປະເມີນລະດັບທາດເຫຼັກຕາມຄວາມເໝາະສົມ.

ອາການເຫຼົ່ານີ້ບໍ່ສາມາດຢືນຢັນໄດ້ດ້ວຍຕົນເອງວ່າເປັນພາວະເລືອດຈາງ ເພາະອາດເກີດຈາກສາເຫດອື່ນໆ ໄດ້ເຊັ່ນກັນ. ຫາກສົງໄສວ່າຕົນເອງມີພາວະນີ້ ຄວນພົບແພດເພື່ອປະເມີນອາການ ແລະກວດເລືອດຕາມຄວາມເໝາະສົມ. ບໍ່ຄວນຊື້ທາດເຫຼັກມາຮັບປະທານເອງ ໂດຍທີ່ຍັງບໍ່ຮູ້ສາເຫດ.

6. ຄວາມຜິດປົກກະຕິຂອງຮໍໂມນ ຫຼືພະຍາດປະຈຳຕົວອາການອ່ອນເພຍທີ່ເກີດຂຶ້ນຕໍ່ເນື່ອງ ອາດກ່ຽວຂ້ອງກັບພະຍາດບາງຊະນິດ ເຊັ່ນ ພາວະຕ່ອມໄທຣອຍເຮັດວຽກຕ່ຳ ໂລກເບົາຫວານ ຫຼືພະຍາດຊໍາເຮື້ອບາງປະເພດ.ຜູ້ທີ່ມີພາວະຕ່ອມໄທຣອຍເຮັດວຽກຕ່ຳ ອາດມີອາການເມື່ອຍງ່າຍ ຂີ້ໜາວ ນ້ຳໜັກເພີ່ມ ຫຼື ຖ່າຍບໍ່ເປັນປົກກະຕິ. ສ່ວນຜູ້ທີ່ມີລະດັບນ້ຳຕານໃນເລືອດສູງ ອາດມີອາການຫິວນ້ຳເລື້ອຍໆ ປັດສະວະບ່ອຍ ແລະນ້ຳໜັກຫຼຸດລົງໂດຍບໍ່ໄດ້ຕັ້ງໃຈຮ່ວມດ້ວຍ.

ແນວໃດກໍຕາມ ອາການຂອງແຕ່ລະພະຍາດມີຄວາມແຕກຕ່າງກັນ ແລະການມີພຽງອາການອ່ອນເພຍຢ່າງດຽວ ຍັງບໍ່ພຽງພໍທີ່ຈະວິນິດໄສພະຍາດໄດ້. ຫາກຮູ້ສຶກເມື່ອຍລ້າຕໍ່ເນື່ອງໂດຍບໍ່ຮູ້ສາເຫດ ຄວນປຶກສາແພດເພື່ອພິຈາລະນາປະຫວັດສຸຂະພາບ ການໃຊ້ຢາ ແລະການກວດທີ່ຈຳເປັນ.

7. ພຶດຕິກຳໃນຊີວິດປະຈຳວັນ ທີ່ເຮັດໃຫ້ຮ່າງກາຍຟື້ນຟູໄດ້ບໍ່ເຕັມທີ່ການດື່ມກາເຟ ຫຼືເຄື່ອງດື່ມທີ່ມີຄາເຟອີນໃນຊ່ວງບ່າຍຫາຕອນແລງ ການດື່ມເຫຼົ້າກ່ອນເຂົ້ານອນ ການຮັບປະທານອາຫານບໍ່ພຽງພໍ ແລະການບໍ່ຄ່ອຍເຄື່ອນໄຫວຮ່າງກາຍ ລ້ວນແຕ່ອາດສົ່ງຜົນຕໍ່ຄຸນນະພາບການນອນ ຫຼືເຮັດໃຫ້ຮູ້ສຶກອ່ອນເພຍໃນມື້ຕໍ່ມາໄດ້.

ໃນບາງກໍລະນີ ຢາບາງຊະນິດກໍອາດເຮັດໃຫ້ງ່ວງນອນ ຫຼືອ່ອນເພຍເປັນຜົນຂ້າງຄຽງໄດ້ເຊັ່ນກັນ. ຫາກເລີ່ມມີອາການຫຼັງຈາກປ່ຽນຢາ ຫຼືປັບຂະໜາດຢາ ຄວນປຶກສາແພດ ຫຼືແພດການຢາ ແລະບໍ່ຄວນຢຸດຢາທີ່ແພດສັ່ງໃຫ້ດ້ວຍຕົນເອງ.

ນອນຄົບ 8 ຊົ່ວໂມງແຕ່ຍັງອ່ອນເພຍ ຄວນປັບພຶດຕິກຳແນວໃດ?

- ເຂົ້ານອນແລະຕື່ນນອນໃຫ້ເປັນເວລາ: ພະຍາຍາມຮັກສາເວລາໃຫ້ໃກ້ຄຽງກັນທຸກມື້ ລວມທັງມື້ພັກ ເພື່ອຊ່ວຍໃຫ້ນາລິກາຊີວິດເຮັດວຽກເປັນຈັງຫວະ.

- ຈັດຫ້ອງນອນໃຫ້ເໝາະສົມ: ຫຼຸດແສງແລະສຽງລົບກວນ ພ້ອມປັບອຸນຫະພູມໃຫ້ຮູ້ສຶກສະບາຍ.

- ຫຼີກລ່ຽງຄາເຟອີນໃກ້ເວລາເຂົ້ານອນ: ຫາກເປັນຄົນໄວຕໍ່ຄາເຟອີນ ຄວນງົດກາເຟແລະເຄື່ອງດື່ມທີ່ມີຄາເຟອີນຕັ້ງແຕ່ຊ່ວງບ່າຍ ຫຼືໄວກວ່ານັ້ນຕາມຄວາມເໝາະສົມ.

- ຈຳກັດການດື່ມເຫຼົ້າ: ເຖິງແມ່ນວ່າເຫຼົ້າອາດເຮັດໃຫ້ຮູ້ສຶກງ່ວງນອນ ແຕ່ສາມາດລົບກວນຄຸນນະພາບການນອນໄດ້.- ຮັບປະທານອາຫານໃຫ້ພຽງພໍ: ເລືອກກິນອາຫານທີ່ຫຼາກຫຼາຍ ມີໂປຣຕີນ ຜັກ ໝາກໄມ້ ແລະແຫຼ່ງພະລັງງານທີ່ເໝາະສົມ ບໍ່ອຶດອາຫານຈົນຮ່າງກາຍໄດ້ຮັບສານອາຫານບໍ່ພຽງພໍ.

- ເຄື່ອນໄຫວຮ່າງກາຍຢ່າງສະໝ່ຳສະເໝີ: ການຍ່າງ ຫຼືອອກກຳລັງກາຍຕາມຄວາມເໝາະສົມ ຊ່ວຍສົ່ງເສີມສຸຂະພາບແລະການນອນ ແຕ່ຄວນຫຼີກລ່ຽງກິດຈະກຳໜັກໃກ້ເວລາເຂົ້ານອນ ຫາກເຮັດໃຫ້ນອນຫຼັບຍາກ.

- ຈົດບັນທຶກການນອນ: ບັນທຶກເວລາເຂົ້ານອນ ເວລາຕື່ນ ການຕື່ນກາງດຶກ ການດື່ມກາເຟ ແລະອາການອ່ອນເພຍ ເພື່ອຊ່ວຍສັງເກດຮູບແບບທີ່ກ່ຽວຂ້ອງກັນ.

ອາການແບບໃດຄວນໄປພົບແພດ?

ຫາກປັບພຶດຕິກຳການນອນແລ້ວແຕ່ຍັງຮູ້ສຶກອ່ອນເພຍຕໍ່ເນື່ອງຫຼາຍອາທິດ ຫຼືອາການເລີ່ມລົບກວນການເຮັດວຽກແລະຊີວິດປະຈຳວັນ ຄວນໄປພົບແພດເພື່ອປະເມີນຫາສາເຫດ ໂດຍສະເພາະເມື່ອມີອາການອື່ນໆ ຮ່ວມດ້ວຍ ເຊັ່ນ:ນ້ຳໜັກຫຼຸດລົງໂດຍບໍ່ໄດ້ຕັ້ງໃຈ.

ໃຈສັ່ນ.

ຕໍ່ໜ້າ 3

ນອນຄົບ 8 ຊົ່ວໂມງແລ້ວ ແຕ່ຍັງຮູ້ສຶກອ່ອນເພຍ ເກີດຈາກຫຍັງໄ... (ຕໍ່ຈາກໜ້າ 2)

ຫາຍໃຈບໍ່ອີ່ມ.

ອາລົມປ່ຽນແປງ.

ນອນກົນສຽງດັງ ພ້ອມກັບມີອາການງ່ວງນອນຫຼາຍໃນຕອນກາງວັນ.

ສິ່ງສຳຄັນ: ຫາກມີອາການເຈັບໜ້າເອິກ ຫາຍໃຈລຳບາກຢ່າງຮຸນແຮງ ເປັນລົມ ຫຼືມີອາການອ່ອນແຮງຢ່າງກະທັນຫັນ ຄວນເຂົ້າຮັບການກວດຮັກສາທາງການແພດໂດຍດ່ວນ. ແລະຫາກງ່ວງນອນຫຼາຍຈົນສ່ຽງຕໍ່ການຫຼັບໃນ ບໍ່ຄວນຂັບລົດ ຫຼືເຮັດວຽກກັບເຄື່ອງຈັກ ຈົນກວ່າອາການຈະປອດໄພ.

ສະຫຼຸບ: ນອນຄົບ 8 ຊົ່ວໂມງແຕ່ຍັງອ່ອນເພຍ ເປັນສິ່ງທີ່ບໍ່ຄວນມອງຂ້າມ ການນອນຄົບ 8 ຊົ່ວໂມງແຕ່ຍັງຮູ້ສຶກອ່ອນເພຍ ອາດເກີດຈາກຄຸນນະພາບການນອນທີ່ບໍ່ດີ ເວລານອນບໍ່ສະໝ່ຳສະເໝີ ຄວາມຄຽດ ພາວະຢຸດຫາຍໃຈຂະນະຫຼັບ ພາວະເລືອດຈາງ ຫຼືພະຍາດປະຈຳຕົວບາງຊະນິດ.

ດັ່ງນັ້ນ ບໍ່ຄວນແກ້ໄຂບັນຫາດ້ວຍການເພີ່ມເວລານອນພຽງຢ່າງດຽວ ໂດຍບໍ່ສົງເກດສາເຫດອື່ນໆ.ຫາກອາການເກີດຂຶ້ນເປັນບາງຄັ້ງ ອາດເລີ່ມຈາກການປັບເວລາເຂົ້ານອນ ແລະພຶດຕິກຳກ່ອນນອນໃຫ້ເໝາະສົມ.

ແຕ່ຫາກມີອາການອ່ອນເພຍຕໍ່ເນື່ອງ ຫຼືມີອາການຜິດປົກກະຕິອື່ນໆ ຮ່ວມດ້ວຍ ຄວນປຶກສາແພດເພື່ອຄົ້ນຫາສາເຫດທີ່ແທ້ຈິງ.ເພາະການພັກຜ່ອນທີ່ດີ ບໍ່ໄດ້ວັດຈາກຈຳນວນຊົ່ວໂມງພຽງຢ່າງດຽວ ແຕ່ຕ້ອງເຮັດໃຫ້ຮ່າງກາຍຟື້ນຟູໄດ້ຢ່າງເຕັມທີ່ ແລະພ້ອມສຳລັບການໃຊ້ຊີວິດໃນມື້ຕໍ່ໄປ.

ມີການກວດພົບສັນຍານວິທະຍຸ ປິດສະໜາຈາກທິດທາງລະບົບດ... (ຕໍ່ຈາກໜ້າ 1)

ປະເພດຊຸບເປີເອີດ 3 ດວງ ໂດຍດາວເຄາະດວງນອກສຸດມີຊື່ວ່າ K2-155d ຕັ້ງຢູ່ໃກ້ເຂດທີ່ອາດເໝາະສົມຕໍ່ການດຳລົງຊີວິດຮອບດາວລິກາແມ່.

ສັນຍານທີ່ກວດພົບມີຊື່ວ່າ NBS 260108 ເປັນຄື້ນວິທະຍຸທີ່ມີຄວາມຄົງທີ່ ແລະມີຄວາມເຂັ້ມຂຸ້ນຢູ່ໃນຊ່ວງຄວາມຖີ່ທີ່ແຄບຫຼາຍ.

ສິ່ງທີ່ເຮັດໃຫ້ສັນຍານນີ້ໜ້າສົນໃຈເປັນພິເສດ ຄືປະກົດການທາງທຳມະຊາດໃນຈັກກະວານສ່ວນໃຫຍ່ ແທບຈະບໍ່ສ້າງສັນຍານທີ່ມີຄວາມເຂັ້ມຂຸ້ນຢູ່ໃນຊ່ວງຄວາມຖີ່ແຄບຂະໜາດນີ້. ໃນຂະນະທີ່ສັນຍານຈາກເຄື່ອງສິ່ງທີ່ມະນຸດສ້າງຂຶ້ນມັກຈະມີລັກສະນະຄ້າຍຄືກັນ.

ດັ່ງນັ້ນ ສັນຍານປະເພດນີ້ຈຶ່ງກາຍເປັນໜຶ່ງໃນເປົ້າໝາຍສຳຄັນຂອງການຄົ້ນຫາຮ່ອງຮອຍທາງເທັກໂນໂລຊີຈາກສິ່ງມີຊີວິດນອກໂລກ.

ຂໍ້ສັງເກດທີ່ໜ້າສົນໃຈອີກຢ່າງໜຶ່ງ ຄືສັນຍານປາກົດຂຶ້ນສະເພາະໃນຊ່ອງຮັບສັນຍານທີ່ຫັນໜ້າໄປຫາລະບົບດາວ K2-155 ເທົ່ານັ້ນ ໃນຂະນະທີ່ຊ່ອງຮັບສັນຍານອີກ 18 ຊ່ອງຂອງກ້ອງ FAST ບໍ່ພົບສັນຍານທີ່ສອດຄ່ອງກັນ.

ນອກຈາກນີ້ ຄວາມຖີ່ຂອງສັນຍານຍັງຄ່ອຍໆຫຼຸດລົງຕາມເວລາ ເຮັດໃຫ້ເກີດເສັ້ນລາຍທີ່ປ່ຽນແປງໄປໃນກຣາຟຂໍ້ມູນການສັງເກດການ.

ທີມວິໄຈກ່າວວ່າ ການສຶກສາຄັ້ງນີ້ມີເປົ້າໝາຍເພື່ອຊ່ວຍຕອບຄຳຖາມໜຶ່ງທີ່ມະນຸດສົງໄສມາຢ່າງຍາວນານ ນັ້ນຄືນອກຈາກໂລກແລ້ວ ຍັງມີສິ່ງມີຊີວິດທີ່ມີສະຕິປັນຍາຢູ່ໃນຈັກກະວານອີກຫຼືບໍ່?

ແນວໃດກໍຕາມ ການກວດພົບສັນຍານທີ່ຜິດປົກກະຕິ ບໍ່ໄດ້ໝາຍຄວາມວ່າສາມາດລະບຸແຫຼ່ງກຳເນີດຂອງສັນຍານນັ້ນໄດ້ໂດຍທັນທີ. ໂປຣແກຣມສາມາດກວດຈັບ ແລະຄັດເລືອກສັນຍານທີ່ໜ້າສົນໃຈສຳລັບການວິໄຈໄດ້ ແຕ່ບໍ່ສາມາດຢືນຢັນໄດ້ເອງວ່າສັນຍານເຫຼົ່ານັ້ນເກີດຈາກປະກົດການທາງທຳມະຊາດ ຫຼືເກີດຈາກເທັກໂນໂລຊີທີ່ມະນຸດສ້າງຂຶ້ນ.

ນັກວິທະຍາສາດເຫັນວ່າ ຈຳເປັນຕ້ອງປຽບທຽບຂໍ້ມູນຈາກຊ່ອງຮັບສັນຍານທັງ 19 ຊ່ອງຂອງກ້ອງ FAST ເພີ່ມເຕີມ ເພື່ອກຳນົດຕຳແໜ່ງ ແລະການເຄື່ອນທີ່ຂອງແຫຼ່ງກຳເນີດສັນຍານໃຫ້ແມ່ນຍຳຫຼາຍຂຶ້ນ. ການກວດສອບເພີ່ມເຕີມອາດຊ່ວຍແຍກສັນຍານທີ່ມາຈາກອາວະກາດ ອອກຈາກສັນຍານລົບກວນທີ່ເກີດຈາກອຸປະກອນ ຫຼືເທັກໂນໂລຊີຂອງມະນຸດ.

ເບິ່ງພາບຂະໜາດໃຫຍ່. | ພາບກ້ອງໂທລະທັດວິທະຍຸ FAST ຂອງປະເທດຈີນ ຖ່າຍເມື່ອວັນທີ 10 ສິງຫາ 2025.

ພ າ ບ : SCJiang / Wikimedia Commons

ກ້ອງ FAST ສາມາດກວດຈັບສັນຍານວິທະຍຸທີ່ອ່ອນຫຼາຍໄດ້ ເນື່ອງຈາກມີພື້ນທີ່ຮັບສັນຍານຂະໜາດໃຫຍ່. ກ້ອງໂທລະທັດນີ້ຖືກສ້າງຂຶ້ນໃນອ່າງພູມສັນຖານທຳມະຊາດທາງຕອນໃຕ້ຂອງປະເທດຈີນ ມີເສັ້ນຜ່າສູນກາງປະມານ 500 ແມັດ ແລະມີພື້ນທີ່ໃຫຍ່ເທົ່າກັບສະໜາມກິລາບານເຕະ 30 ສະໜາມ.

ຜົນງານວິໄຈຄັ້ງນີ້ ໄດ້ຮັບການຕີພິມໃນວາລະສານວິຊາການດາລາສາດ ໂດຍນຳໃຊ້ຂໍ້ມູນຈາກກ້ອງ FAST ທີ່ປັບຫົກໄວ້ໃນປີ 2021 ຈາກການສັງເກດລະບົບດາວເຄາະທັງໝົດ 33 ລະບົບ ເພື່ອຫົດສອບໂປຣແກຣມຄອມພິວເຕີຊຸດໃໝ່.

ລະບົບດາວ K2-155 ຖືກເລືອກເປັນເປົ້າໝາຍທີ່ໜ້າສົນໃຈ ເນື່ອງຈາກດາວເຄາະ K2-155d ຕັ້ງຢູ່ໃກ້ເຂດທີ່ອາດເໝາະສົມຕໍ່ການດຳລົງຊີວິດ ເຊິ່ງເປັນບໍລິເວນຮອບດາວລິກາທີ່ມີອຸນຫະພູມເໝາະສົມ ເພື່ອໃຫ້ນ້ຳສາມາດຄົງຢູ່ໃນຮູບແບບຂອງແຫຼວເທິງພື້ນຜິວດາວເຄາະໄດ້.

ດ າ ວ ເ ຄ າ ະ K2-155d ມີລັດສະໝີປະມານ 1.6 ເທົ່າຂອງໂລກ ແລະໃຊ້ເວລາປະມານ 40.7 ວັນ ໃນການໂຄຈອນຮອບດາວລິກາແມ່ຄົບໜຶ່ງຮອບ.

ຄຳວ່າ ຊຸບເປີເອີດ ໝາຍເຖິງດາວເຄາະທີ່ມີຂະໜາດໃຫຍ່ກວ່າໂລກ ແຕ່ນ້ອຍກວ່າດາວເຄາະຍັກໃຫຍ່ທີ່ເປັນນ້ຳກ້ອນ ເຊັ່ນ ດາວເນບຈູນ ແລະດາວຢູເຣນັສ.

ແທນທີ່ຈະຄົ້ນຫາຮ່ອງຮອຍຂອງສິ່ງມີຊີວິດໂດຍກົງ ທີມວິໄຈມຸ່ງເນັ້ນໄປທີ່ການຄົ້ນຫາສັນຍານວິທະຍຸ ເຊິ່ງອາດເປັນຮ່ອງຮອຍຂອງເທັກໂນໂລຊີທີ່ສ້າງຂຶ້ນໂດຍອາລະຍະທຳທີ່ມີຄວາມກ້າວໜ້າ.

ການເຄື່ອນທີ່ສຳພັນລະຫວ່າງແຫຼ່ງກຳເນີດທີ່ຢູ່ໄກກັບໂລກ ອາດເຮັດໃຫ້ຄວາມຖີ່ຂອງສັນຍານປ່ຽນແປງໄປຕາມເວລາ. ສຳລັບສັນຍານ NBS 260108 ພົບວ່າຄວາມຖີ່ຄ່ອຍໆຫຼຸດລົງ ເຮັດໃຫ້ເກີດຮູບແບບການປ່ຽນແປງໃນຂໍ້ມູນທີ່ສັງເກດໄດ້.

ເບິ່ງພາບຂະໜາດໃຫຍ່. | ພາບປຽບທຽບຂະໜາດລະຫວ່າງດາວເຄາະ K2-155 d ແ ລ ະ ໂ ລ ກ (ພ າ ບ ຈິນຕະນາການຂອງສິລະປິນ). ພາບ: Martin Vargic / Halcyon Maps / Wikimedia Commons

ເມື່ອວິເຄາະຊ່ອງສັນຍານແຍກຕາມທິດທາງການສັ່ນຂອງຄື້ນທັງສອງຊ່ອງຂອງກ້ອງໂທລະທັດ ນັກວິໄຈພົບວ່າ ສັນຍານປາກົດຢ່າງຊັດເຈນໃນຊ່ອງ YY ແຕ່ບໍ່ປາກົດໃນຊ່ອງ XX. ອັດຕາສ່ວນສັນຍານຕໍ່ສັນຍານລົບກວນໃນຊ່ອງ YY ຢູ່ທີ່ປະມານ 23 ແລະເມື່ອນຳຂໍ້ມູນຈາກທັງສອງຊ່ອງມາລວມກັນ ຕົວເລກນີ້ຫຼຸດລົງເຫຼືອປະມານ 15.

ສັນຍານດັ່ງກ່າວຖືກບັນທຶກໄດ້ໃນການສັງເກດການຫຼາຍຄັ້ງ ໃນວັນທີ 10 ກັນຍາ 2021 ໃນຂະນະທີ່ກ້ອງ FAST ກຳລັງຕິດຕາມສັງເກດດາວ K2-18, GJ-9066 ແລະ Ross 128.

ທີມວິໄຈຍັງກວດພົບສັນຍານວິທະຍຸຄວາມຖີ່ແຄບອີກຫຼາຍສັນຍານຈາກລະບົບດາວເຫຼົ່ານີ້ ແຕ່ມີລັກສະນະແຕກຕ່າງກັນ ຄື ສັນຍານຈາກ K2-18 ມີຄວາມອ່ອນຫຼາຍ, ສັນຍານຈາກ GJ-9066 ແທບບໍ່ມີການປ່ຽນແປງຄວາມຖີ່ ແລະສັນຍານຈາກ Ross 128 ປາກົດຢູ່ໃນຄວາມຖີ່ທີ່ແຕກຕ່າງອອກໄປເລັກນ້ອຍ.

ລັກສະນະເຫຼົ່ານີ້ເຮັດໃຫ້ສັນຍານ NBS 260108 ກາຍເປັນຫົວຂໍ້ທີ່ຄວນສຶກສາຄົ້ນຄວ້າຕໍ່ໄປ. ແນວໃດກໍຕາມ ຂໍ້ມູນທີ່ມີຢູ່ໃນປັດຈຸບັນຍັງບໍ່ພຽງພໍທີ່ຈະສະຫຼຸບໄດ້ວ່າ ສັນຍານດັ່ງກ່າວມາຈາກເທັກໂນໂລຊີຂອງສິ່ງມີຊີວິດນອກໂລກ ຫຼືເປັນພຽງສັນຍານລົບກວນເທົ່ານັ້ນ.

ທັງນີ້ໃນການກວດພົບສັນຍານວິທະຍຸທີ່ຜິດປົກກະຕິ ແຕ່ຍັງບໍ່ມີຫຼັກຖານຢືນຢັນວ່າມາຈາກສິ່ງມີຊີວິດນອກໂລກ/ ສັນຍານນີ້ອາດເປັນສັນຍານລົບກວນຈາກໂລກ ແລະ ຍັງບໍ່ມີການຢືນຢັນວ່າເປັນສັນຍານຈາກມະນຸດຕ່າງດາວ

ທີ່ມາ: earthsky

ຂ່າວພາຍໃນ · 11:25 ໂມງ · ອ່ານ 11 ຄັ້ງ

ຮອງນາຍົກລັດຖະມົນຕີ ຢ້ຽມຢາມ ແລະ ເຮັດວຽກຢູ່ບໍລິສັດ ອັງຕັດ ມາຍນິ່ງກຣຸບ ເນັ້ນເອົາໃຈໃສ່ຮັກສາຄວາມສະຫງົບ ປະຕິບັດຕາມລະບຽບກົດໝາຍຂອງລັດຢ່າງເຂັ້ມງວດ ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມຍືນຍົງ



ວັນທີ 4 ພະຈິກ 2026, ທ່ານ ພົນເອກ ຄຳລຽງ ອຸທະໄກສອນ ຄະນະກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ພ້ອມຄະນະນຳຈາກກະຊວງປ້ອງກັນປະເທດ, ຄະນະນຳແຂວງອັດຕະປື ແລະ ຄະນະນຳເມືອງຊານໄຊ ໄດ້ເດີນທາງຢ້ຽມຢາມ ແລະ ເຮັດວຽກຢູ່ບໍລິສັດ ອັງຕັດ ມາຍນິ່ງ ກຣຸບ ຈຳກັດ ທີ່ຕັ້ງຢູ່ເມືອງຊານໄຊ ແຂວງອັດຕະປື. ໂດຍໃຫ້ການຕ້ອນຮັບຂອງທ່ານ ບຸ່ຍແອ້ງດຶກ, ປະທານສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ອັງຕັດ ມາຍນິ່ງ ກຣຸບ ພ້ອມດ້ວຍຄະນະຜູ້ບໍລິຫານ, ພະນັກງານ ແລະ ກອງກຳລັງປ້ອງກັນຄວາມສະຫງົບປະຈຳເຂດໂຄງການ ໃຫ້ການຕ້ອນຮັບ.

ຈາກນັ້ນ, ຄະນະຜູ້ບໍລິຫານບໍລິສັດ ໄດ້ລາຍງານຄວາມຄືບໜ້າຂອງການດຳເນີນກິດຈະການຂຸດຄົ້ນແຮ່ທາດ, ການປົກປັກຮັກສາສະພາບສິ່ງແວດລ້ອມ, ການປະກອບສ່ວນພັດທະນາເສດຖະກິດ-ສັງຄົມໃນທ້ອງຖິ່ນ ລວມທັງການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໃນເຂດອ້ອມຂ້າງໂຄງການ.

ໂອກາດນີ້, ທ່ານ ພົນເອກ ຄຳລຽງ ອຸທະໄກສອນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ທາງບໍລິສັດ ຍາດມາໄດ້ໃນໄລຍະຜ່ານມາ, ພ້ອມທັງເນັ້ນໃຫ້ຄະນະບໍລິຫານ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຮັກສາຄວາມສະຫງົບ, ປະຕິບັດຕາມລະບຽບກົດໝາຍຂອງລັດຢ່າງເຂັ້ມງວດ, ເຄົ່າລິບ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມຍືນຍົງ. ພ້ອມນັ້ນ, ໃຫ້ສຸມໃສ່ຈັດຕັ້ງປະຕິບັດແຜນ ການຜະລິດ ແລະ ວຽກງານຕ່າງໆ ໃຫ້ບັນລຸຕາມຄາດໝາຍ, ເອົາໃຈໃສ່ຝຶກອົບຮົມດ້ານເຕັກນິກວິຊາ ການໃຫ້ແກ່ພະນັກງານລາວ ເພື່ອຍົກສູງຄວາມຮູ້ ແລະ ທັກສະວິຊາ ຊີບ. ພ້ອມທັງໄດ້ເນັ້ນໃຫ້ບໍລິ ສັດ ສືບຕໍ່ປະສານສົມທົບກັບອຳນາດການປົກຄອງແຂວງ, ເມືອງ ໃນການຊ່ວຍເຫຼືອ ແລະ ພັດທະ ນາພື້ນຖານໂຄງລ່າງ, ປັບປຸງ ຊີວິດການເປັນຢູ່ຂອງປະຊາຊົນໃນເຂດ ໂຄງການ ໃຫ້ດີຂຶ້ນ.

ພາຍຫຼັງການພົບປະລາຍງານ, ທ່ານ ຮອງນາຍົກລັດຖະມົນຕີ ພ້ອມຄະນະ ໄດ້ລົງຢ້ຽມຊົມສະຖານທີ່ຂຸດຄົ້ນ, ໂຮງງານແປຮູບ ແລະ ເຂດດຳເນີນງານຕົວຈິງຂອງ ບໍລິສັດ ເພື່ອຮັບຊາບສະພາບການດຳເນີນງານຕົວຈິງ.

ຂ່າວ: ວິໄລສັກ ແກ້ວຫຼວງໂຄດ

ຂ່າວພາຍໃນ · 16:05 ໂມງ · ອ່ານ 10 ຄັ້ງ

ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພົບປະ ປະທານປົກຄອງ ສາທາລະນະລັດ ຕາຕາຣສະຖານ ສ. ຣັດເຊຍ



ໃນຕອນເຊົ້າຂອງວັນທີ 05 ພະຈິກ 2026 ທີ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ທ່ານ ສັນຕິພາບ ພົມວິຫານ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ແຫ່ງ ສປປ ລາວ ໄດ້ຕ້ອນຮັບ ແລະ ພົບປະກັບ ທ່ານ ຣຸດສຕຳ ມິນນິຄານົບ (Rustam Minnikhanov), ປະທານປົກຄອງ ສາທາລະນະລັດ ຕາຕາຣສະຖານ, ສະຫະພັນ ຣັດເຊຍ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມເຮັດວຽກຢູ່ ສປປ ລາວ ໃນລະຫວ່າງວັນທີ 4-5 ພະຈິກ 2026.

ໃນໂອກາດດັ່ງກ່າວ, ທ່ານ ສັນຕິພາບ ພົມວິຫານ, ຮອງນາຍົກລັດຖະມົນຕີ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ ການເດີນທາງມາຢ້ຽມຢາມ ເຮັດວຽກຢູ່ ສປປ ລາວ ຂອງ ທ່ານ ຣຸດສຕຳ ມິນນິຄານົບ, ປະທານປົກຄອງ ສ. ຕາຕາຣສະຖານ ພ້ອມດ້ວຍຄະນະ ໃນຄັ້ງນີ້ ພ້ອມທັງໄດ້ສະແດງຄວາມຊົມເຊີຍ ສ. ຣັດເຊຍ ກໍຄື ສາທາລະນະລັດ ຕາຕາຣສະຖານ ຕໍ່ຜົນສຳເລັດອັນຈົບງາມ ໃນການເປັນເຈົ້າພາບຈັດກອງປະຊຸມສາກົນທີ່ສຳຄັນ ເປັນຕົ້ນ ກອງປະຊຸມສຸດຍອດ BRICS ໃນປີ 2024 ກໍຄືກອງປະຊຸມສຸດຍອດ ສະເຫຼີມສະຫຼອງການພົວພັນ ອາຊຽນ-ຣັດເຊຍ ຄົບຮອບ 35 ປີ ໃນເດືອນ ມິຖຸນາ 2026. ພ້ອມດຽວກັນນີ້, ທ່ານ ກໍໄດ້ສະແດງຄວາມຂອບໃຈ ຕໍ່ການຮັບຕ້ອນ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຄະນະຜູ້ແທນ ສປປ ລາວ ຫຼາຍຄະນະ ທີ່ເດີນທາງໄປເຄື່ອນໄຫວເຮັດວຽກ ຢູ່ ກາຊານ ໃນໄລຍະຜ່ານມາ.

ໃນຂະນະດຽວກັນ, ທ່ານ ຣຸດສຕຳ ມິນນິຄານົບ, ປະທານປົກຄອງ ສ. ຕາຕາຣ ສະຖານ ກໍໄດ້ສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ໃນຄັ້ງນີ້ ແລະ ໄດ້ແຈ້ງໃຫ້ຊາບ ກ່ຽວກັບ ຈຸດປະສົງໃນການເດີນທາງມາເຮັດວຽກ ຢູ່ ສປປ ລາວ ແລະ ແຜນການຮ່ວມມືສອງຝ່າຍ ໃນຕໍ່ໜ້າ. ພ້ອມດຽວກັນນີ້, ກໍໄດ້ສະແດງຄວາມຍິນດີທີ່ຈະສືບຕໍ່ເພີ່ມທະວີການປະສານງານຮ່ວມກັນ ເພື່ອຊຸກຍູ້ສິ່ງເສີມການພົວພັນຮ່ວມມືໃນຕໍ່ໜ້າ ແລະ ເຊື່ອໝັ້ນວ່າ ການຢ້ຽມຢາມຄັ້ງນີ້ ຈະເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສປປ ລາວ ແລະ ສ. ຣັດເຊຍ ກໍຄືການພົວພັນຮ່ວມມື ລະຫວ່າງ ສາທາລະນະລັດ ຕາຕາຣສະຖານ ແລະ ສປປ ລາວ ໃນໄລຍະໃໝ່ ໂດຍສະເພາະ ແມ່ນ ການຮ່ວມມືດ້ານເສດຖະກິດ-ການຄ້າ ສອງຝ່າຍ ໃຫ້ກ້າວເຂົ້າສູ່ລວງເລິກ ໃນຕໍ່ໜ້າ.

ພ້ອມດຽວກັນນັ້ນ, ໃນໂອກາດພົບປະກັນຄັ້ງນີ້ ສອງຝ່າຍ ໄດ້ສະແດງຄວາມປິຕິຍິນດີ ຕໍ່ໝາກຜົນຂອງສາຍພົວພັນມິດຕະພາບ ແລະ ການຮ່ວມມື ທີ່ເປັນມູນເຊື້ອ ກໍຄືການເປັນຄູ່ຮ່ວມມື

ຕໍ່ໜ້າ 5

ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພົບປະ ປະທານປົກຄ... (ຕໍ່ຈາກໜ້າ 4)

ຍຸດທະສາດໃນພາກພື້ນອິນໂດປາຊີຟິກ ລະຫວ່າງ ສປປ ລາວ ແລະ ສ. ຣັດເຊຍ ທີ່ມີການຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ບົນພື້ນຖານແຫ່ງຄວາມເຂົ້າອົກເຂົ້າໃຈ ແລະ ໄວ້ເນື້ອເຊື່ອໃຈໃນລະດັບສູງ ຊຶ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມ ຂອງການນຳຂັ້ນສູງ ແລະ ລະດັບອື່ນໆ ຢ່າງເປັນປົກກະຕິ. ນອກຈາກນີ້, ສອງຝ່າຍ ກໍໄດ້ຊຸກຍູ້ໃຫ້ມີການສືບຕໍ່ຮ່ວມມືກັນເພີ່ມຂຶ້ນໃນອະນາຄົດ ໂດຍສະເພາະ ໃນຂະແໜງການທີ່ສອງຝ່າຍມີທ່າແຮງ ແລະ ມີຄວາມສົນໃຈຮ່ວມກັນ ເປັນຕົ້ນແມ່ນ ການຮ່ວມມືດ້ານການຄ້າ-ການລົງທຶນ, ພະລັງງານ, ການເຊື່ອມໂຍງ-ເຊື່ອມຈອດ, ການທ່ອງທ່ຽວ, ວັດທະນະທຳ, ການສຶກສາ, ສາທາລະນະສຸກ, ວຽກງານຊາວໜຸ່ມ, ແຮງງານ ແລະ ສະຫວັດດີການສັງຄົມ ແລະ ດ້ານອື່ນໆ.

ການພົບປະກັນຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບ, ກົງໄປກົງມາ ແລະ ເຂົ້າອົກເຂົ້າໃຈ ເຊິ່ງກັນ ແລະ ກັນ ແຕ່ຕົ້ນຕະຫຼອດປາຍ.

ຂ່າວ: ກະຊ່ວງການຕ່າງປະເທດ ແຫ່ງ ສປປ ລາວ

ຂ່າວພາຍໃນ · 16:17 ໂມງ · ອ່ານ 9 ຄັ້ງ

ເຈົ້າໜ້າທີ່ກວດລ້າງກຸ່ມແກ້ງກໍ່ອາຊະຍາກຳທາງອິນເຕີເນັດ ຢູ່ບ້ານຊ້າງຄູ້ ກັກຕົວຜູ້ເປົ້າໝາຍ 27 ຄົນ



ໃນວັນທີ 5 ພະຈິກ 2026 ເຈົ້າໜ້າທີ່ໜ່ວຍສະເພາະກິດກະຊວງ ປກສ ໄດ້ເຂົ້າມ້າງກຸ່ມແກ້ງກໍ່ອາຊະຍາກຳທາງອິນເຕີເນັດ ແລະ ການພະນັນອອນລາຍ ຢູ່ເຮືອນໃຫ້ເຊົ່າ ໜ່ວຍ 24 ບ້ານຊ້າງຄູ້ ເມືອງໄຊທານີ ນະຄອນຫຼວງວຽງຈັນ ກັກຕົວເປົ້າໝາຍສົງໄວ ໄດ້ 27 ຄົນ, ໃນນີ້ ມີສັນຊາດຈີນ 26 ຄົນ, ສັນຊາດໄທ 1 ຄົນ, ພ້ອມຍຶດເຄື່ອງຂອງກາງປະເພດໂທລະສັບມືຖື ຈຳນວນ 805 ເຄື່ອງ, ຄອມພິວເຕີຕັ້ງໂຕະ 32 ເຄື່ອງ, ຄອມພິວເຕີໂນດບຸກ 3 ເຄື່ອງ.

ຈາກນັ້ນ ມີຜູ້ຍິງຄົນໜຶ່ງ ມາຕິດຕໍ່ພົວພັນຫາເຈົ້າໜ້າທີ່ ເພື່ອຈະຂໍປະກັນເອົາກຸ່ມແກ້ງດັ່ງກ່າວ ເຈົ້າໜ້າທີ່ຈຶ່ງໄດ້ຄວບຄຸມຕົວໄປດຳເນີນການສືບສວນ-ສອບສວນ ຈຶ່ງຮູ້ວ່າຜູ້ກ່ຽວຊື່ ນາງ ພູວຽງ ອາຍຸ 31 ປີ ອາຊີບແປພາສາ ຢູ່ບ້ານ ສາມະຄີໄຊ ເມືອງແກ້ວອຸດົມ ແຂວງ ວຽງຈັນ, ປັດຈຸບັນພັກເຊົ່າຢູ່ບ້ານຫຼັກຫີນ ເມືອງສີໂຄດຕະບອງ ນະຄອນຫຼວງ ວຽງຈັນ.

ປັດຈຸບັນເຈົ້າໜ້າທີ່ພວມດຳເນີນ ການສືບສວນ-ສອບສວນຂະຫຍາຍຜົນຫາ ພັກພວກ ແລະ ຫົວໂປ່ໂຕການ.

ພາບ-ຂ່າວ: ຄຳໂຖ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 15:56 ໂມງ · ອ່ານ 9 ຄັ້ງ

ທ່ານ ນາຍົກລັດຖະມົນຕີ ສະເໜີປະທານປົກຄອງສາທາລະນະລັດ ຕາຕາຣສະຖານ ຊຸກຍູ້ສົ່ງເສີມການຮ່ວມມືສອງຝ່າຍ ໃຫ້ເພີ່ມຂຶ້ນໃນຫຼາຍຂົງເຂດ



ໃນຕອນເຊົ້າຂອງວັນທີ 05 ພະຈິກ 2026, ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານ ສະເຫຼີມໄຊ ກົມມະສິດ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ໃຫ້ກຽດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງທ່ານ ຣຸດສຕຳ ມິນນິຄານິບ (Rustam MINNIKHANOV) ປະທານປົກຄອງສາທາລະນະລັດ ຕາຕາຣສະຖານ ແຫ່ງ ສະຫະພັນຣັດເຊຍ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນລະຫວ່າງ ວັນທີ 04-05 ພະຈິກ 2026.

ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງ ຕໍ່ການເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງທ່ານ ຣຸດສຕຳ ມິນນິຄານິບ ພ້ອມດ້ວຍຄະນະ, ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມື ທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສປປ ລາວ ແລະ ສ ຣັດເຊຍ ກໍຄື ການພົວພັນຮ່ວມມືຂອງ ສປປ ລາວ ກັບຕາຕາຣສະຖານ ໃຫ້ນັບມື້ແໜ້ນແຟ້ນ ແລະ ຈະເລີນງອກງາມຍິ່ງໆຂຶ້ນ, ພ້ອມທັງ ສະເໜີຝ່າຍຣັດເຊຍ ຊຸກຍູ້ສົ່ງເສີມການຮ່ວມມືດ້ານການທ່ອງທ່ຽວ, ການໄປມາຫາສູ່ເຊິ່ງກັນແລະກັນ ຂອງປະຊາຊົນສອງຊາດ ໂດຍໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ສປປ ລາວ ໃຫ້ແກ່ປະຊາຊົນຕາຕາຣສະຖານ ໃຫ້ຮູ້ຈັກຫຼາຍຂຶ້ນ ເພື່ອເປັນພື້ນຖານຂະຫຍາຍການຮ່ວມມືໃນຫຼາຍຂົງເຂດຕື່ມ ເປັນຕົ້ນ ເສດຖະກິດ, ວັດທະນະທຳ-ສັງຄົມ, ອຸດສາຫະກຳ, ການຄ້າ, ການລົງທຶນ ແລະ ອື່ນໆ.

ນອກຈາກນັ້ນ ຍັງໄດ້ສະເໜີສ້າງກົນໄກປະສານງານ ລະຫວ່າງ ສະພາການຄ້າ ລາວ-ຕາຕາຣສະຖານ ໃຫ້ມີຄວາມໃກ້ຊິດ ແລະ ເປັນປົກກະຕິ; ສຶກສາຄວາມເປັນໄປໄດ້ ໃນການສ້າງຕັ້ງເມືອງແຂກສ່ຽວ ລະຫວ່າງ ເມືອງກາຊານ ກັບ ເມືອງໃດໜຶ່ງ ຂອງ ສປປ ລາວ ເພື່ອສົ່ງເສີມການໄປມາຫາສູ່ກັນ ຂອງປະຊາຊົນສອງຊາດ.

ທ່ານ ຣຸດສຕຳ ມິນນິຄານິບ ໄດ້ກ່າວສະແດງຄວາມຂອບໃຈ ຕໍ່ທ່ານ ນາຍົກລັດຖະມົນຕີ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ສະເໜີກ່ຽວກັບແຜນການຮ່ວມມືສອງຝ່າຍ ໃນຕໍ່ໜ້າ, ລວມທັງທ່າແຮງດ້ານເສດຖະກິດ ຂອງ ສາທາລະນະລັດ ຕາຕາຣສະຖານ ເປັນຕົ້ນ ການຜະລິດຍີນເຣເລີຄອບເຕີ, ລົດບັນທຸກ ການາສ, ດ້ານໂທລະຄົມ ແລະ ການສື່ສານ, ການຜະລິດ-ການຂົນສົ່ງນ້ຳມັນ ແລະ ອື່ນໆ ເພື່ອຍົກລະດັບການຮ່ວມມືໃຫ້ເກີດດອກອອກຜົນຫຼາຍຂຶ້ນເປັນກ້າວໆ.

ຂ່າວ: ຫ້ອງວ່າການ ສນຍ

ຂ່າວພາຍໃນ · 15:02 ໂມງ · ອ່ານ 7 ຄັ້ງ

ກອງບັນຊາການປ້ອງກັນສູນກາງ ເຂົ້າອວຍພອນ ການນຳ ໂອກາດວັນສ້າງຕັ້ງກຳລັງປ້ອງກັນສູນກາງເນື່ອງໃນໂອກາດວັນສ້າງຕັ້ງກຳລັງປ້ອງກັນສູນກາງ ຄົບຮອບ 65 ປີ



ໃນລະຫວ່າງວັນທີ 3-4 ພະຈິກ 2026 ນີ້, ຄະນະພັກ-ຄະນະນຳ ກອງບັນຊາການປ້ອງກັນສູນກາງ ກະຊວງປ້ອງກັນຄວາມສະຫງົບ ນຳໂດຍ ທ່ານ ພິຈອ ບຸນທິງ ສິດາວົງ ຫົວໜ້າກອງບັນຊາການປ້ອງກັນສູນກາງ ພ້ອມດ້ວຍຄະນະ ໄດ້ເຂົ້າອວຍພອນ ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ທ່ານ ພັອ ວິໄລ ຫລ້າຄຳຟອງ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະ ເທດ ແລະ ທ່ານ ນາງ ວຽງເງີນ ໄຂຄຳພິທູນ ພັນລະຍາປະທານສູນກາງແນວລາວສ້າງຊາດ ເນື່ອງໃນໂອກາດວັນສ້າງຕັ້ງກຳລັງປ້ອງກັນສູນກາງ ຄົບຮອບ 65 ປີ (11 ພະຈິກ 1961-11 ພະຈິກ 2026).

ໃນໂອກາດນີ້, ທ່ານ ພິຈອ ບຸນທິງ ສິດາວົງ ໄດ້ລາຍງານການເຄື່ອນໄຫວ ປະຕິບັດໜ້າທີ່ວຽກງານ ຂອງກອງບັນຊາການປ້ອງກັນສູນກາງ ຕະຫລອດໄລຍະຜ່ານມາ ໃຫ້ບັນດາທ່ານຜູ້ນຳໄດ້ຮັບຊາບ.ພ້ອມກັນນີ້, ກໍໄດ້ກ່າວຢ້ຽມຢາມຖາມຂ່າວ ແລະ ອວຍພອນໄຊອັນປະເສີດ ມາຍັງບັນດາທ່ານການນຳພັກ-ລັດ ຈົ່ງມີສຸຂະພາບພະລານາໄມສົມບູນ, ມີຄວາມຜາສຸກ ໃນຊີວິດສ່ວນຕົວ ແລະ ຄອບຄົວ. ການເຂົ້າອວຍພອນຄັ້ງນີ້, ເພື່ອເປັນການສະແດງຄວາມຮູ້ບຸນຄຸນຕໍ່ບັນດາການນຳ ທີ່ໄດ້ທຸ້ມເທເຫື່ອແຮງ,ສະຕິປັນຍາ ແລະ ຄວາມຮູ້-ຄວາມສາມາດ ເຂົ້າໃນການນຳພາ-ຊີ້ນຳພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງສືບໄປ.


ໃນໂອກາດດັ່ງກ່າວ, ບັນດາການນຳພັກ-ລັດ ກໍໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ພ້ອມທັງຍ້ອງຍໍຊົມເຊີຍຜົນສຳເລັດ ທີ່ກຳລັງປ້ອງກັນສູນກາງ ຍາດມາໄດ້ ຕະຫລອດໄລຍະຜ່ານມາ ແລະ ຄະນະນຳ ກອງບັນຊາການ, ຕະຫລອດຮອດ ນາຍ ແລະ ພົນຕຳຫລວດ ທົ່ວກຳລັງປ້ອງກັນສູນກາງ ທຸກສະຫາຍ ຈົ່ງມີສຸຂະພາບແຂງແຮງ, ສືບຕໍ່ປະຕິບັດໜ້າທີ່ການເມືອງ ທີ່ການຈັດຕັ້ງຂັ້ນເທິງມອບໝາຍໃຫ້ ຢ່າງມີຜົນສຳເລັດ.

ຂ່າວ: ຄຳໂຖ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕິວເລກລ່າສຸດ ທີ່ mahaxan.com/today · ໜ້າ 16 ໃນສະບັບນີ້

ຂ່າວພາຍໃນ · 15:48 ໂມງ · ອ່ານ 5 ຄັ້ງ

ທ່ານ ສອນໄຊ ສີພັນດອນ ປະທານສະພາແຫ່ງຊາດລາວ ເຂົ້າຢ້ຽມຂໍ່ານັບ ທ່ານ ໂຕ ເລີມ ເລຂາທິ ການໃຫຍ່ ປະທານ ປະເທດຫວຽດນາມ



ວັນທີ 4 ພະຈິກ 2026, ສະຫາຍ ສອນໄຊ ສີພັນດອນ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ພ້ອມດ້ວຍຄະ ນະຜູ້ແທນຂັ້ນສູງ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ໂຕ ເລີມ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ກອມມູ ນິດຫວຽດນາມ,ປະທານປະເທດ ແຫ່ງ ສສ ຫວຽດນາມ ໃນໂອກາດເດີນທາງມາຢ້ຽມຢາມ ສສ ຫວຽດນາມ ຢ່າງເປັນທາງການ.

ໂອກາດນີ້, ສອງຜູ້ນຳ ໄດ້ເນັ້ນໜັກເຖິງການຮ່ວມມືຍຸດ ທະສາດ ແລະ ການຮັດແໜ້ນສາຍພົວພັນມິດຕະພາບອັນພິເສດ ໂດຍມີຈຸດສຸມສຳຄັນ ຄື: ສອງຝ່າຍກຽມພ້ອມຈັດກິດຈະກຳສະເຫຼີມສະຫຼອງ ປີສາມັກຄີມິດຕະພາບ ລາວ- ຫວຽດນາມ (ຄົບຮອບ 65 ປີ, ວັນສ້າງຕັ້ງ ການທູດ ແລະ 50 ປີ ການເຊັນສົນທິສັນຍາມິດຕະພາບ); ເລັ່ງຜັນຂະ ຫຍາຍໂຄງການຂະໜາດໃຫຍ່ ເຊັ່ນ: ທ່າ ເຮືອຫວ່ຽອາງ, ເສັ້ນທາງດ່ວນ ວຽງຈັນ-ຮ່າໂນ້ຍ, ເສັ້ນທາງ ລົດໄຟ ລາວ- ຫວຽດນາມ ລວມທັງ ຂົງເຂດພະລັງງານ,ບໍ່ແຮ່ ແລະ ກະສິ ກຳ ເພື່ອໝູນເສດຖະກິດລາວ ໃຫ້ເຂັ້ມແຂງ ຂຶ້ນ. ທັງສອງຝ່າຍ ຢືນຢັນຄືນຄວາມມຸ່ງ ໝັ້ນທີ່ຈະສືບຕໍ່ຮັກສາສາຍພົວ ພັນ ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີ ພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນ ສ່ວນຍຸດທະສາດ ລະຫວ່າງສອງພັກ,ສອງ ລັດ ແລະ ປະຊາຊົນສອງຊາດ ລາວ- ຫວຽດ ນາມ, ຫວຽດນາມ-ລາວ ໃຫ້ໝັ້ນ ຄົງຂະນຶງແກ່ນຕະຫຼອດກາລະນານ.

ສະຫາຍ ສອນໄຊ ສີພັນດອນ ໄດ້ ສະແດງຄວາມຂອບ ໃຈຕໍ່ການຕ້ອນຮັບ ອັນອົບອຸ່ນຂອງ ສະຫາຍເລຂາທິການໃຫຍ່ ໂຕເລີມ, ພ້ອມທັງໄດ້ລາຍງານຜົນການ ເຂົ້າຮ່ວມກອງປະຊຸມພົບປະສອງຝ່າຍກັບ ສະຫາຍ ເຈີນ ແທ້ງ ເໝີ້ນ ພ້ອມຄະນະ ໂດຍພ້ອມກັນຕີລາຄາຄືນການພົວພັນ ຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດ ຂອງສອງປະເທດ ໃນໄລຍະຜ່ານມາ ໂດຍ ສະເພາະການຈັດຕັ້ງປະຕິບັດບົດບັນ ທຶກ ການຮ່ວມມືຂອງສອງສະພາແຫ່ງຊາດ ທີ່ ເຊັນກັນກ່ອນນີ້ເກືອບ 5 ປີ, ພ້ອມກັນ ປຶກສາຫາລືທິດທາງແຜນ ການຮ່ວມມືໃນ ຕໍ່ໜ້າ ໂດຍສະເພາະແມ່ນການສ້າງກົດຈະ ກຳ ເພື່ອສະເຫລີມສະຫລອງປີສາມັກຄີ ມິດຕະພາບລາວ- ຫວຽດນາມ ຄົບຮອບ 65 ປີ, ການພົວພັນການທູດ ແລະ 50 ປີ ສົນທິສັນຍາມິດຕະພາບ ແລະ ການ ຮ່ວມມືລາວ- ຫວຽດນາມ ໃນປີ 2027, ຮ່ວມກັນປຶກສາຫາລື ເພື່ອປັບປຸງບາງເນື້ອ ໃນຂອງບົດບັນທຶກການຮ່ວມມື ລະຫວ່າງ ສອງສະພາແຫ່ງຊາດ ແລະ ສອງຫ້ອງວ່າ ການສະພາແຫ່ງຊາດ ທີ່ຈະໝົດອາຍຸລົງ ໃນປີ 2027 ທີ່ຈະມາເຖິງ.

ພ້ອມນີ້, ຍັງໄດ້ແຈ້ງສະພາບການ ພື້ນເດັ່ນຂອງ ສປປ ລາວ ໂດຍສັງເຂບ ໂດຍສະເພາະໃນ 9 ເດືອນຕົ້ນປີ 2026, ການເຕີບໂຕເສດຖະກິດ (GDP) ບັນລຸ ໄດ້ 4,8% ຄາດຄະ ເນທ້າຍປີ 2026 ແມ່ນ 5,1% ສາມາດຮັກສາໄດ້ສະຖຽນ ລະພາບດ້ານເງິນຕາ, ການປະຕິບັດບັນດາ ຄາດໝາຍດ້ານວັດທະນະທຳ-ສັງຄົມ,ການ ພັດທະນາຊົນນະບົດ ແລະ ແກ້ ໄຂຄວາມ ທຸກຍາກ (ມີຄວາມຄືບໜ້າພໍສົມຄວນ); ພວມສືບຕໍ່ຈັດຕັ້ງປະຕິບັດ ແລະ ຜັນ ຂະຫຍາຍມະຕິຂອງກອງປະຊຸມໃຫຍ່ ຄັ້ງ ທີ XII ຂອງພັກ, ແຜນການພັດທະນາ ເສດ ຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ແລະ ພວມສຸມໃສ່ ປະຕິບັດວາລະແຫ່ງຊາດ ວ່າດ້ວຍການ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມ ທຸກຍາກ ໄລຍະ 2027-2023.

ຕາງໜ້າສະພາແຫ່ງຊາດ, ສະຫາຍ ສອນໄຊ ສີພັນດອນ ສະແດງຄວາມ ຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ ແລະ ຊາບ ຊຶ້ງໃຈເປັນຢ່າງຍິ່ງ ຕໍ່ການນຳຂັ້ນສູງ ຂອງພັກ, ສະພາແຫ່ງຊາດ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ທີ່ໄດ້ ສົ່ງສານສະແດງຄວາມເສົ້າສະຫລົດໃຈ ແລະ ແບ່ງເບົາຄວາມທຸກໂສກ, ຄວາມ ອາໄລອາວອນ ຕໍ່ການຈາກໄປຂອງອະດີດ ປະທານສະພາແຫ່ງຊາດ ໄຊສົມພອນ ພົມ ວິ ຫານ, ພ້ອມທັງ ສົ່ງຄະນະຜູ້ແທນຂັ້ນສູງ ຂອງພັກ-ລັດຫວຽດນາມ ມາຮ່ວມໄວ້ ອາໄລ ແລະ ເຂົ້າຮ່ວມພິທີຊາປະນະກິດ ລະດັບຊາດຂອງ ສະຫາຍ ໄຊສົມພອນ ພົມວິຫານ ອະດີດກຳມະການກົມການ ເມືອງສູນກາງພັກ, ອະດີດປະ ທານສະພາ ແຫ່ງຊາດ ແລະ ຖືໂອກາດນີ້, ນຳເອົາ ຄວາມຍື້ຢາມຖາມຂ່າວອັນອົບອຸ່ນ ແລະ ພອນໄຊອັນປະເສີດ ຂອງ ສະຫາຍ ທອງ ລຸນ ສີສຸລິດ ເລຂາທິການໃຫຍ່, ປະທານ ປະເທດ ແຫ່ງ ສປປ ລາວ ມາຍັງສະຫາຍ ພ້ອມດ້ວຍບັນ ດາສະຫາຍການນຳພັກ-ລັດ ຂອງ ສສ ຫວຽດນາມ.

ຂ່າວພາຍໃນ · 12:29 ໂມງ · ອ່ານ 3 ຄັ້ງ

ປະທານສະພາແຫ່ງຊຸດ ຢ້ຽມຢາມ ສສ ຫວຽດນາມ ຢ່າງເປັນທາງການ



ການຢ້ຽມຢາມ ສສ ຫວຽດນາມ ຢ່າງເປັນທາງການ ຂອງຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດລາວຄັ້ງນີ້ ເພື່ອ ປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນ ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການ ຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ກໍຄືລະຫວ່າງສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ ຫວຽດນາມ ໃຫ້ ກ້າວເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ຂ່າວ-ພາບ: ສະຖານທູດລາວທີ່ຮ່າໂນ້ຍ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວພາຍໃນ · 13:00 ໂມງ · ອ່ານ 2 ຄັ້ງ

ຫົວໜ້າ ຄອສພ ຕ້ອນຮັບທູດອິດສະຕຣາລີ ເຂົ້າຢ້ຽມຂໍ່ານັບອຳລາ



ທ່ານ ຄຳພັນ ເພັຍຍະວົງ ໄດ້ສະແດງຄວາມຕ້ອນຮັບ ຊົມເຊີຍ ແລະ ຕີລາຄາສູງຕໍ່ທ່ານນາງ ເມ ແກນ ຈອນ ທີ່ ສຳເລັດການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ຄັ້ງນີ້ ຊຶ່ງ ຕະຫລອດໃນໄລຍະການປະຕິບັດໜ້າທີ່ ທ່ານທູດໄດ້ ເອົາໃຈໃສ່ຢ່າງຕັ້ງໜ້າເຂົ້າໃນການປະກອບສ່ວນເສີມສ້າງ ການພົວພັນຮ່ວມມື ແລະ ຊ່ວຍເຫລືອເຊິ່ງກັນ ແລະ ກັນ ລະຫວ່າງ ສປປ ລາວ-ອິດສະຕຣາລີ ທີ່ມີມູນເຊື້ອມາແຕ່ ຍາວນານນັ້ນ ໃຫ້ນັບມື້ເພີ່ມພູນແຕກດອກອອກຜົນຍິ່ງໆ ຂຶ້ນ, ພ້ອມນີ້ທ່ານຫົວໜ້າຄະນະໂຄສະນາອົບຮົມສູນກາງ ພັກ ຍັງໄດ້ອວຍພອນໃຫ້ທ່ານທູດ ຈົ່ງເດີນທາງກັບຄືນ ປະເທດດ້ວຍຄວາມສະຫວັດດີພາບ ແລະ ປະສົບ ຜົນສຳເລັດໃນໜ້າທີ່ໃໝ່ທີ່ມີກຽດຂອງທ່ານ.

ໂອກາດດັ່ງກ່າວ, ທ່ານທູດກໍໄດ້ສະແດງຄວາມ ຂອບໃຈຕໍ່ ທ່ານ ຄຳພັນ ເພັຍຍະວົງ ທີ່ໄດ້ໃຫ້ການຕ້ອນ ຮັບອັນອົບອຸ່ນ ແລະ ສະແດງຄວາມຂອບໃຈຕໍ່ການຈັດຕັ້ງ ທຸກພາກສ່ວນຂອງ ສປປ ລາວ ທີ່ໄດ້ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກທຸກຢ່າງ ຕະຫລອດໃນໄລຍະການປະຕິບັດໜ້າທີ່ ຈົນໄດ້ຮັບຜົນສຳເລັດໃນຄັ້ງນີ້. ພ້ອມທັງໄດ້ ໃຫ້ຄຳໝັ້ນສັນຍາວ່າ ພາຍຫລັງກັບຄືນ ປະເທດແລ້ວ ຍັງຈະສືບຕໍ່ເອົາໃຈໃສ່ ຕິດຕາມ ແລະ ປະກອບສ່ວນເຂົ້າໃນການ ເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງ ອິດສະຕຣາລີ-ລາວ ໃຫ້ນັບມື້ ແໜ້ນແຟ້ນຍິ່ງໆຂຶ້ນ.

ຂ່າວ: ຍຸພິນທອງ

ເຫດການ

ເຫດການ · 13:25 ໂມງ · ອ່ານ 34 ຄັ້ງ

ຫວາດສຽວ! ເຫດລົດໃຫຍ່ຢຽບກ້ອນຫີນ ຟີ້ງເຂົ້າຮ້ານຂາຍເຄື່ອງແຄມທາງ ເສັ້ນທາງ ບ.ປ່າໄລ່ ມ.ທ່າພະບາດ ຂ.ບໍລິຄຳໄຊ ມີຄລິບ!



ມີຜູ້ໃຊ້ເຟສບຸກ (ປະຊາຊົນໃນ ພື້ນທີ່) ໄດ້ໂພສລະບາຍຄວາມອັດອັ້ນຕັນ ໃຈ ແລະ ຮ້ອງຂໍຄວາມຊ່ວຍເຫຼືອ ກ່ຽວກັບສະພາບ ເສັ້ນທາງປ່າໄລ່ ເມືອງທ່າ ພະບາດ ແຂວງບໍລິຄຳໄຊ ທີ່ປະຈຸບັນມີ ສະພາບເປ່ເພ, ເປື້ອນເປິ ແລະ ສ້າງຄວາມ ອັນຕະລາຍໃຫ້ກັບຜູ້ສັນຈອນໄປມາຢ່າງ ຮ້າຍແຮງ.

📌 ໂດຍມີປະເດັນຄວາມເດືອດ ຮ້ອນຫຼັກໆ ດັ່ງນີ້:

ຂີ້ຝຸ່ນໝາແໜ້ນ: ແຕ່ລະມື້ມີຂີ້ຝຸ່ນ ຟຸ້ງກະຈາຍຢ່າງຮຸນແຮງ ຈົນປະຊາຊົນໂດຍ ສະເພາະເດັກນ້ອຍ ແຄ້ນຂີ້ຝຸ່ນ ແລະ ສ່ຽງ ຕໍ່ການເປັນໂລກທາງເດີນຫາຍໃຈ/ໂລກ ປອດ.

ລົດໃຫຍ່ຂັບໄວ: ມີທັງລົດແຮ່, ລົດ ບັນທຸກພູເບຍ ແລະ ລົດຂົນສົ່ງຕ່າງໆ ຂັບ ຂີ່ດ້ວຍຄວາມໄວສູງ ຄືຈ້ຽງຂັບຢູ່ທາງດອນ ກີດ ໂດຍບໍ່ມີການຫຼຸດຄວາມໄວ ເວລາ ຜ່ານເຂດຊຸມຊົນ.

ຄວາມບໍ່ປອດໄພ: ເສັ້ນທາງມີ ຄວາມສ່ຽງເກີດອຸປະຕິເຫດສູງ "ຫຼື ຖ້າມີ ຄົນຕາຍຟຸ້ນບໍ່ ຈຶ່ງຊິມາແປງ?" ຄົນບໍ່ໄດ້ຢູ່ ແຄມທາງ ບໍ່ມີວັນເຂົ້າໃຈຄວາມລະແວງ ໃນການດຳລົງຊີວິດແຕ່ລະມື້.

📢 ຝາກເຖິງ ສສຂ ເມືອງທ່າ ພະບາດ ແຂວງບໍລິຄຳໄຊ:

ຂອນຂໍໃຫ້ທ່ານຊ່ວຍເກັບກຳເກັບ ບັນຫາຄວາມທຸກຍາກລຳບາກຂອງ ປະຊາຊົນໃນຄັ້ງນີ້ ເຂົ້າໄປສະເໜີ ແລະ ລາຍງານຕໍ່ກອງປະຊຸມສະພາແດ່ ເພື່ອໃຫ້ ມີການລົງມາສ້ອມແປງ, ແກ້ໄຂ ແລະ ພັດທະນາຢ່າງເປັນຮູບປະທຳ.

👤 ພ້ອມໃຫ້ຂໍ້ມູນຄວາມຈິງ:

ທາງຜູ້ຮ້ອງທຸກຍິນດີໃຫ້ຂໍ້ມູນ ເພີ່ມເຕີມທຸກຢ່າງກ່ຽວກັບຄວາມ ເດືອດຮ້ອນນີ້ ສາມາດຕິດຕໍ່ໄດ້ທີ່ເບີ: 5555 2858 (ພ້ອມຢືນຢັນວ່າ ນີ້ຄືການ ເວົ້າຄວາມຈິງ ບໍ່ໄດ້ມີເຈດຕະນາຮ້າຍ ເພາະ ເດືອດຮ້ອນແທ້ໆ).

#ລາຍງານຄວາມເດືອດຮ້ອນ #ເສັ້ນທາງປ່າໄລ່ #ເມືອງທ່າພະບາດ #ແຂວງບໍລິຄຳໄຊ #ຮ້ອງທຸກ #ສະພາ ປະຊາຊົນແຂວງ

ທີ່ມາ: ແອັດດີ ປານມານຸວົງ

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ເຫດການ · 09:26 ໂມງ · ອ່ານ 21 ຄັ້ງ

ສອງສ່ຽວ ຮ່ວມກັນສໍ້ໂກງຊັບ 651ລ້ານກວ່າກີບ ບໍ່ລອດຖືກດຳເນີນຄະດີ



ວັນທີ 4 ພະຈິກ 2026, ພັທ ບຸນແອັດ ຊຸບົວຈັນ ຮອງຫົວໜ້າກອງບັນຊາການ ປກສ ເມືອງໄຊເສດຖາ ນະຄອນ ຫຼວງວຽງຈັນ ຖະແຫຼງຕໍ່ສື່ມວນຊົນ ປກສ ກ່ຽວກັບການກັບຕົວຜູ້ກໍ່ເຫດສໍ້ໂກງຊັບພົນລະເມືອງ ປະເພດ ລົດຈັກໄຟຟ້າ ແລະ ເຄື່ອງໃຊ້ໄຟຟ້າ.

ພັທ ບຸນແອັດ ຊຸບົວຈັນ ໃຫ້ຮູ້ວ່າ: ພາຍຫຼັງໄດ້ຮັບແຈ້ງ ຄວາມຈາກຜູ້ເສຍຫາຍວ່າຖືກສໍ້ໂກງຊັບພົບລະເມືອງ ຈາກນັ້ນ ເຈົ້າໜ້າທີ່ຕຳຫຼວດ ປກສ ເມືອງໄຊເສດຖາ ໄດ້ສືບ ສວນ-ສອບສວນ ຫາຜູ້ກະທຳຜິດ ຮອດເວລາ 13:00 ໂມງ ຂອງວັນທີ 9 ກັນຍາ 2026 ເຈົ້າໜ້າທີ່ວິຊາສະເພາະ ປະ ສານສົມທົບກັບ ປກສ ກຸ່ມ 1 ບ້ານຈອມມະນີ ໄດ້ເຂົ້າກັກ ຕົວ ນາງ ໝີນ້ອຍ ອາຍຸ 42 ປີ ຢູ່ບ້ານຈອມມະນີ ເມືອງໄຊ ເສດຖາ ນະຄອນຫຼວງວຽງຈັນ ແລະ ນາງ ຄຳປະສົງ ອາ ຍຸ 42 ປີ ຢູ່ບ້ານໂພນພະເນົາ ເມືອງ ໄຊເສດ ຖາ ນະຄອນຫຼວງວຽງຈັນ, ແລ້ວນຳສົ່ງຕົວ ພວກກ່ຽວມາດຳເນີນການສອບສວນ.

ຜ່ານການສອບສວນ ນາງ ໝີນ້ອຍ ແລະ ນາງ ຄຳປະ ສົງ ໄດ້ຮັບສາລະພາບ ວ່າ: ພວກກ່ຽວໄດ້ສໍ້ໂກງຊັບພົນລະ ເມືອງ ແທ້ ໂດຍການໃຊ້ເລ່ຫຼ່ຽມຕົວະຍົວະ ຫຼອກລວງດ້ວຍການດາວລົດຈັກໄຟຟ້າ ແລະ ເຄື່ອງໃຊ້ໄຟຟ້າອີກຈຳນວນໜຶ່ງ ແລ້ວເອົາລົດ ແລະ ເຄື່ອງໃຊ້ທີ່ດາວມານັ້ນ (ຜ່ອນຈ່າຍຍັງບໍ່ໝົດ) ໄປຂາຍເອົາເງິນມາ ໃຊ້ຈ່າຍສ່ວນຕົວ; ເຊິ່ງຮ້ານທີ່ພວກກ່ຽວ ດາວລົດຈັກໄຟຟ້າທົ່ວນະຄອນຫຼວງ ວຽງຈັນ ລວມທັງໝົດມີ 13 ຮ້ານ ມີລົດ ທັງໝົດ 42 ຄັນ, ເອ 5 ໜ່ວຍ ແລະ ຕູ້ ເຢັນ 2 ໜ່ວຍ, ລວມມູນຄ່າຄວາມເສຍ ຫາຍທັງໝົດ 651.836.000 ກີບ.

ປັດຈຸບັນ, ສາມາດເກັບກູ້ລົດຈັກ ຄືນມາໄດ້ ລົດຈັກ 17 ຄັນ, ເອ 5 ໜ່ວຍ, ຕູ້ເຢັນ 1 ໜ່ວຍ ແລະ ໄດ້ສົ່ງຄືນ ເຈົ້າຂອງຊັບເດີມແລ້ວ, ພ້ອມນີ້ ເຈົ້າໜ້າທີ່ ປກສ ເມືອງໄຊເສດຖາ ຍັງສືບຕໍ່ເລັ່ງຊອກ ຫາລົດ ແລະ ເຄື່ອງທີ່ຜູ້ກະທຳຜິດນຳໄປ ຂາຍ ເພື່ອເກັບກູ້ຄືນເຈົ້າຂອງເດີມ.

ໂອກາດນີ້, ພັທ ບຸນແອັດ ຊຸບົວຈັນ ຍັງໄດ້ຮຽກຮ້ອງມາຍັງ ຜູ້ປະກອບການ ຫຼື ຮ້ານຄ້າຂາຍລົດຕ່າງໆ ຈົ່ງມີສະຕິໃນການ ກວດສອບປະຫວັດລູກຄ້າຜູ້ທີ່ຈະມາຊື້-ຂາຍ ແລະ ດາວ ລົດໃຫ້ລະອຽດຖີ່ຖ້ວນ ເພື່ອປ້ອງກັນບໍ່ໃຫ້ເຫດການທີ່ມີລັກສະນະ ນີ້ເກີດຂຶ້ນອີກ; ຖ້າພົບເຫັນວ່າຕົນເອງຕົກ ຢູ່ໃນກໍລະນີດັ່ງກ່າວນີ້ ໃຫ້ລວບລວມຂໍ້ມູນ ຫຼັກຖານ ເຂົ້າມາແຈ້ງຄວາມຕໍ່ເຈົ້າໜ້າທີ່ ປກສ ເມືອງໄຊເສດຖາ ເພື່ອຈະໄດ້ດຳເນີນ ການຕາມຂັ້ນຕອນຂອງກົດໝາຍຕໍ່ໄປ.

ທີ່ມາ: ຄວາມສະຫງົບ Lao Security News

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ເຫດການ · 15:03 ໂມງ · ອ່ານ 7 ຄັ້ງ

ປກສ ແຂວງອັດຕະປື ກັກຕົວຜູ້ຖືກຫາ ຄະດີລັກສາຍໄຟສະຖານີໂທລະຄົມ ເຊື່ອມໂຍງ 5 ຄັ້ງ



ເຈົ້າໜ້າທີ່ຕຳຫຼວດ ກອງບັນຊາການ ປກສ ແຂວງອັດຕະປື ສາມາດກັກຕົວຜູ້ຖືກຫາ 1 ຄົນ ທີ່ກໍ່ເຫດລັກສາຍໄຟ ແລະ ສາຍທອງແດງ ທໍ່ແອ ຕາມສະຖານີໂທລະຄົມຫຼາຍແຫ່ງ ໃນແຂວງອັດຕະປື ເຊິ່ງມີການກໍ່ເຫດລວມ 5 ຄັ້ງ.

ຕາມການໃຫ້ຂໍ້ມູນຈາກເຈົ້າໜ້າທີ່ພະແນກສືບສວນ-ສອບສວນຄະດີອາຍາ ຫ້ອງຕຳຫຼວດ ກອງບັນຊາການ ປກສ ແຂວງອັດຕະປື ລະບຸວ່າ: ໃນຄັ້ງວັນທີ 29 ຕຸລາ 2026 ເວລາ 9:00 ໂມງ ໄດ້ຮັບແຈ້ງ ຄວາມຈາກບໍລິສັດຢູນິເທວ ວ່າ: ມີຄົນຮ້າຍລັກຕັດສາຍໄຟຢູ່ສະຖານີແຫ່ງໜຶ່ງ ເຂດບ້ານໄຊໂພສີ, ເມືອງສາມັກຄີໄຊ. ພາຍຫຼັງຮັບແຈ້ງຄວາມ ເຈົ້າໜ້າທີ່ໄດ້ລົງເກັບກຳຂໍ້ມູນ ແລະ ຕິດຕາມສືບຫາເປົ້າ ໝາຍ ຈົນຮອດເວລາ 20:00 ໂມງ ຂອງວັນດຽວກັນ ຈຶ່ງສາມາດກັກຕົວຜູ້ຖືກຫາ ຊື່ ທ້າວ ຊຳ ທອງ ອາຍຸ 34 ປີ ຫວ່າງງານ ຢູ່ບ້ານເຊກອງ ເມືອງ ສາມັກຄີໄຊ ມາສືບສວນຕາມຂໍ້ຫາລັກຊັບ.

ຜ່ານການສືບສວນ ຜູ້ກ່ຽວໄດ້ຮັບສາລະພາບວ່າ ໄດ້ກໍ່ເຫດລັກຊັບລວມ 5 ຄັ້ງ ປະກອບມີ: ລັກສາຍທອງແດງທໍ່ແອ 1 ຄັ້ງ ແລະ ລັກຕັດສາຍໄຟ 1 ຄັ້ງ ຢູ່ສະຖານີບໍລິສັດຢູນິເທວ ເຂດບ້ານໄຊໂພສີ, ລັກສາຍໄຟຢູ່ສະຖານີເຂດບ້ານເຊກອງ 2 ຄັ້ງ ເມືອງສາມັກຄີໄຊ ແລະ ລັກສາຍໄຟຢູ່ສະຖານີພູປ່າອໍ ເຂດຫຼັກ 52 ເມືອງໄຊເສດຖາ 1 ຄັ້ງ.

ປັດຈຸບັນ ເຈົ້າໜ້າທີ່ກຳລັງດຳເນີນຄະດີຕາມຂັ້ນຕອນກົດໝາຍ ພ້ອມທັງສືບສວນຂະຫຍາຍຜົນຫາຜູ້ທີ່ອາດມີສ່ວນພົວພັນ ເພື່ອນຳມາດຳເນີນຄະດີຕາມກົດໝາຍ.

ຂ່າວ: ປກສ ແຂວງອັດຕະປື

ຂ່າວຕ່າງປະເທດ

◆ ຂ່າວຕ່າງປະເທດ · 14:12 ໂມງ · ອ່ານ 16 ຄັ້ງ

“ສະເທືອນໃຈ! ພະນັກງານເກັບຄ່າໂດຍສານຍິງໃນອິນເດຍ ເສຍຊີວິດ ຫຼັງຖືກຜູ້ໂດຍສານຍູ້ຕົກລົດ ຈາກເຫດຂັດແຍ່ງກັນເລື່ອງເງິນທອນຄ່າປີ້ລົດເມ”



ພະນັກງານເກັບຄ່າໂດຍສານຍິງ ອາຍຸ 24 ປີ ສັງກັດບໍລິສັດຂົນສົ່ງທາງລົດເມລັດເຕລັງການາ (TGSRTC) ປະເທດອິນເດຍ ໄດ້ເສຍຊີວິດໃນຄ່ຳວັນອັງຄານ ວັນທີ 3 ພະຈິກ 2026 ຫຼັງຮັກສາຕົວໄດ້ 10 ວັນ ຈາກເຫດຂັດແຍ່ງກັນເລື່ອງເງິນທອນຄ່າປີ້ລົດເມ ຢູ່ເມືອງພັດຣາດຣິ ໂຄທາກູເດັມ ລັດເຕລັງການາ.

ຜູ້ເສຍຊີວິດຊື່ ນາງ ກຸນດລາ ປຣາ ອາລິກາ (Gundla Pravalika) ປະຈຳຢູ່ສູນຂົນສົ່ງມານຸກູຣຸ ແລະ ມີພູມລຳເນົາຢູ່ບ້ານອາດາຊ ນາກາ (Adarsh Nagar) ເມືອງມານຸກູຣຸ. ເຫດການເກີດຂຶ້ນໃນວັນທີ 25 ຕຸລາ 2026 ຂະນະທີ່ນາງກຳລັງປະຕິບັດໜ້າທີ່ຢູ່ເທິງລົດເມສາຍ Palle Velugu ເດີນທາງຈາກເມືອງມານຸກູຣຸ ໄປຍັງເມືອງບາດຣາຈາລາມ ໂດຍເຫດເກີດຂຶ້ນໃກ້ກັບບ້ານມິດຕາກູເດັມ ເຂດອັດສະວາປຸຣາມ.

ຕາມການລາຍງານຂອງເຈົ້າໜ້າທີ່ ຜູ້ໂດຍສານຊື່ ນາງ ບານອດ ໂມນິກາ (Banoth Mounika) ຊຶ່ງເປັນຜູ້ຢູ່ອາໄສໃນພື້ນທີ່ ໄດ້ຂຶ້ນລົດເມພ້ອມກັບລູກຊາຍ ແລະ ຍື່ນເງິນຈຳນວນ 100 ຣູປີ ໃຫ້ນາງ ປຣາອາລິກາ ເພື່ອຊື້ປີ້ໂດຍສານໃຫ້ລູກຊາຍ. ພະນັກງານໄດ້ອອກປີ້ມູນຄ່າ 10 ຣູປີ ແລະ ເນື່ອງຈາກບໍ່ມີເງິນຍ່ອຍ ຈຶ່ງໄດ້ຂຽນບັນທຶກເງິນທອນທີ່ເຫຼືອ 90 ຣູປີ ໄວ້ໃນປີ້ ແລະ ແຈ້ງໃຫ້ຜູ້ໂດຍສານມາຮັບເງິນຄືນພາຍຫຼັງ.

ຕໍ່ມາ ເມື່ອລົດເມໃກ້ຈະຮອດຈຸດທີ່ນາງ ໂມນິກາ ຈະລົງລົດ ນາງໄດ້ທວງເງິນທອນສ່ວນທີ່ເຫຼືອ ຈົນເກີດການໂຕ້ຖຽງກັນຢ່າງຮຸນແຮງ. ໃນລະຫວ່າງນັ້ນ ຜູ້ໂດຍສານຖືກກ່າວຫາວ່າໄດ້ຜັກນາງ ປຣາ ອາລິກາ ອອກຈາກປະຕູລົດເມທີ່ກຳລັງແລ່ນ ເຮັດໃຫ້ນາງຕົກລົງໃສ່ຖະໜົນ ແລະ ລໍ້ດ້ານຫຼັງຂອງລົດໄດ້ທັບຂາ ຈົນໄດ້ຮັບ

ຕໍ່ໜ້າ 11

“ສະເທືອນໃຈ! ພະນັກງານເກັບຄ່າໂດຍສານຍິງໃນອິນເດຍ ເສຍ... (ຕໍ່ຈາກໜ້າ 10)

ບາດເຈັບສາຫັດ.

ຫຼັງເກີດເຫດ ນາງໄດ້ຖືກນຳສົ່ງໄປຮັກສາຢູ່ໂຮງໝໍໃນເມືອງບາດຣາຈາລາມ ກ່ອນຈະຖືກຍ້າຍໄປຍັງໂຮງໝໍເອກະຊົນໃນເມືອງໄຮເດຣາບັດ ເພື່ອຮັບການປິ່ນປົວຂັ້ນສູງ. ເຖິງແມ່ນຈະໄດ້ຮັບການຮັກສາເປັນເວລາ 10 ວັນ ແຕ່ສຸດທ້າຍນາງກໍໄດ້ເສຍຊີວິດຍ້ອນບາດແຜທີ່ໄດ້ຮັບ ໃນຄ່ຳວັນອັງຄານ.

ດ້ານຕຳຫຼວດເຂດອັດສະວາປຸຣາມ ໄດ້ຮັບຄຳຮ້ອງທຸກ ແລະ ເປີດການສືບສວນຄະດີ ພ້ອມທັງຈັບກຸມນາງ ໂມນິກາ ຜູ້ຖືກກ່າວຫາ ແລະ ນຳຕົວສົ່ງສານເພື່ອດຳເນີນຄະດີຕາມກົດໝາຍ.

ກ່ອນໜ້ານີ້ ທ່ານ ພອນນຳ ປຣາພາກ (Ponnam Prabhakar) ລັດຖະມົນຕີຂົນສົ່ງຂອງລັດ ໄດ້ອອກມາປະນາມເຫດຮຸນແຮງດັ່ງກ່າວ ໃນຂະນະທີ່ນາງ ປຣາວາລິກາ ກຳລັງຮັກສາຕົວຢູ່ໂຮງໝໍ.

ພາຍຫຼັງຮັບຊາບວ່າພະນັກງານຂົນສົ່ງໄດ້ເສຍຊີວິດ ລັດຖະມົນຕີໄດ້ຢືນຢັນວ່າ ລັດຖະບານຈະໃຫ້ການຊ່ວຍເຫຼືອພະນັກງານລົດເມ ແລະ ໄດ້ສັ່ງການໃຫ້ເຈົ້າໜ້າທີ່ດຳເນີນມາດຕະການທາງກົດໝາຍຢ່າງເຂັ້ມງວດຕໍ່ຜູ້ທີ່ກໍ່ເຫດຮຸນແຮງຕໍ່ພະນັກງານໃນເວລາປະຕິບັດໜ້າທີ່.

ໃນວັນພຸດ ທ່ານໄດ້ປະກາດມາດຕະການຊ່ວຍເຫຼືອຄອບຄົວຜູ້ເສຍຊີວິດ ໂດຍລະບຸວ່າ ລັດຖະບານຈະຈັດຫາວຽກເຮັດໃຫ້ແມ່ຂອງນາງ ປຣາວາລິກາ, ຈັດສັນເຮືອນພາຍໃຕ້ໂຄງການ Indiramma ໃຫ້ຄອບຄົວ ພ້ອມທັງມອບເງິນຊ່ວຍເຫຼືອຈຳນວນ 10 ລ້ານຣູປີ ຫຼື 1 ກຣອຣ໌ (Crore) ຈາກລັດຖະບານ ແລະ ອົງການ RTC ໃນນາມຄອບຄົວຜູ້ເສຍຊີວິດ. ພ້ອມຢືນຢັນວ່າຈະຊ່ວຍເຫຼືອຄອບຄົວຢ່າງເຕັມທີ່.

ນອກຈາກນັ້ນ ທ່ານຍັງໄດ້ຮຽກຮ້ອງໃຫ້ຜູ້ໂດຍສານ ຖ້າຫາກມີຂໍ້ຮ້ອງທຸກ ຫຼື ບັນຫາໃນການໃຊ້ບໍລິການ ຄວນດຳເນີນການຜ່ານຊ່ອງທາງທາງການ ແທນການໃຊ້ຄວາມຮຸນແຮງ.

ເຫດການເສຍຊີວິດຂອງພະນັກງານຍິງຄັ້ງນີ້ ໄດ້ສ້າງຄວາມບໍ່ພໍໃຈໃຫ້ແກ່ພະນັກງານ ແລະ ສະຫະພັນແຮງງານຂອງອົງການ RTC ເປັນຢ່າງຫຼາຍ. ຕົວແທນພະນັກງານໄດ້ປະກາດວ່າ ຈະຢຸດໃຫ້ບໍລິການລົດເມໃນເຂດເມືອງຄຳມ໋ານ (Khammam) ໃນວັນພຸດ ເພື່ອປະທ້ວງຕໍ່ເຫດການດັ່ງກ່າວ ພ້ອມຮຽກຮ້ອງໃຫ້ດຳເນີນຄະດີຕໍ່ຜູ້ຖືກກ່າວຫາຢ່າງເຂັ້ມງວດ ແລະ ໃຫ້ການຊ່ວຍເຫຼືອແກ່ຄອບຄົວຂອງນາງ ປຣາວາລິກາ.

ທີ່ມາ: ndtv

◆ ຂ່າວຕ່າງປະເທດ · 10:00 ໂມງ · ອ່ານ 15 ຄັ້ງ

ທຣຳ ບອກ “ຂ້ອນຂ້າງຈິງ” ທີ່ສົງຄາມເຮັດໃຫ້ເສຍໄຊການເລືອກຕັ້ງ ແຕ່ຢືນຢັນວ່າຄຸ້ມຄ່າ



ໂດນັລ ທຣຳ ອອກມາຍອມຮັບວ່າ ເປັນເລື່ອງຂ້ອນຂ້າງຈິງທີ່ ການເຮັດສົງຄາມກັບອີຣານ ຄືເຫດຜົນທີ່ເຮັດໃຫ້ຣີພັບບລີກັນເສຍໄຊໃນການເລືອກຕັ້ງກາງສະໄໝ ແຕ່ຢືນຢັນວ່າມັນຄຸ້ມຄ່າກັບການຂັດຂວາງບໍ່ໃຫ້ອີຣານມີອາວຸດນິວເຄຼຍ.

ເມື່ອວັນພຸດທີ 4 ພະຈິກ 2026 ໂດນັລ ທຣຳ ປະທານາທິບໍດີສະຫະລັດໆ ອອກມາສະແດງຄວາມຄິດເຫັນສອດຄ່ອງກັບທ່ານ ເຈດີ ແວນຊ໌ ຮອງປະທານາທິບໍດີສະຫະລັດໆ ທີ່ລະບຸວ່າ ສົງຄາມອີຣານຄືເຫດຜົນທີ່ເຮັດໃຫ້ພັກຣີພັບບລີກັນພ່າຍແພ້ໃນການເລືອກຕັ້ງກາງສະໄໝເມື່ອວັນອັງຄານຜ່ານມາຢ່າງຍັບເຍີນ.

“ຂ້ອຍຄິດວ່າມັນຂ້ອນຂ້າງຈິງ ເພາະມັນເຮັດໃຫ້ລາຄານ້ຳມັນແອັດຊັງປັບຕົວສູງຂຶ້ນໜ້ອຍໜຶ່ງໃນໄລຍະສັ້ນ” ທຣຳ ກ່າວຢູ່ບໍລິເວນເຂດກໍ່ສ້າງຫ້ອງບອນຮູມ ທຳນຽບຂາວ ເມື່ອຖືກຖາມເຖິງຖະແຫຼງການຂອງແວນຊ໌ ເຊິ່ງເບິ່ງຄືວ່າຈະພາດພິງເຖິງຕົວທ່ານ ທຣຳ.

“ແຕ່ຖ້າຂ້ອຍຕ້ອງກັບໄປເຮັດມັນອີກຄັ້ງ ຂ້ອຍກໍຈະເຮັດອີກ ເພາະໃນໄລຍະຍາວແລ້ວ ມັນຄືຄຳຕອບດຽວ” ທ່ານ ທຣຳ ກ່າວຕໍ່ “ພວກເຈົ້າບໍ່ອາດຍອມໃຫ້ອີຣານມີອາວຸດນິວເຄຼຍໄດ້”.

ກ່ອນໜ້ານີ້ໃນວັນດຽວກັນ ທ່ານ ແວນຊ໌ ໄດ້ໂພສຂໍ້ຄວາມຍາວເທິງໂຊຊຽວ ມີເດຍວ່າ “ເຫດຜົນທີ່ແທ້ຈິງທີ່ພວກເຮົາເສຍໄຊນັ້ນ ແມ່ນຈະແຈ້ງສຳລັບເກືອບທຸກຄົນຢູ່ແລ້ວ” ໂດຍລະບຸວ່າສົງຄາມອີຣານຄືສາເຫດຫຼັກຂອງການພ່າຍແພ້ຄັ້ງໃຫຍ່ຂອງພັກຣີພັບບລີກັນ.

“ຖ້າພວກເຈົ້າຢາກຈະໂຕ້ຖຽງວ່າມັນຄຸ້ມຄ່າແລ້ວ ການເສຍຕຳແໜ່ງວຸດທິສະພາໄປໃນອີກ 6 ປີຂ້າງໜ້າເປັນເລື່ອງທີ່ຄຸ້ມຄ່າແລ້ວ ກໍເວົ້າໄປເລີຍ ເວົ້າໄປເລີຍວ່າມັນເປັນລາຄາທີ່ຄຸ້ມແລ້ວທີ່ຈະຕ້ອງຈ່າຍ ບໍ່ວ່າຈະເຫັນດີນຳຫຼືບໍ່ ຢ່າງໜ້ອຍນັ້ນກໍຄືຄວາມຈິງໃຈ” ຮອງປະທານາທິບໍດີສະຫະລັດໆ ລະບຸໃນໂພສ.

ທາງດ້ານປະທານາທິບໍດີ ທຣຳ ກ່າວວ່າ ເພິ່ນບໍ່ໄດ້ຮູ້ສຶກແປກໃຈກັບໂພສຂອງແວນຊ໌ “ຂ້ອຍຮູ້ວ່າລາວຮູ້ສຶກແນວໃດກັບເລື່ອງນີ້ ຂ້ອຍຄິດວ່າມັນກໍ ... ຂ້ອຍຄິດວ່າມັນບໍ່ມີບັນຫາຫຍັງດອກ”.

“ຂ້ອຍຄິດວ່າມັນດີແລ້ວ ພວກເຮົານັ້ນຮູ້ຢູ່ແລ້ວ ຂ້ອຍຮູ້ເລື່ອງນັ້ນ ຂ້ອຍຮູ້ດີຕັ້ງແຕ່ຕອນຕັດສິນໃຈເຂົ້າໄປ ແລະ ພວກເຮົາໄດ້ຍັບຍັ້ງບໍ່ໃຫ້ພວກເຂົາຄອບຄອງອາວຸດນິວເຄຼຍ ແລະ ພວກເຂົາຈະບໍ່ມີວັນໄດ້ມັນໄປຄອບຄອງ” ທຣຳ ກ່າວ.

ແລະ ເມື່ອຖືກຖາມວ່າສົງຄາມຄັ້ງນີ້ຄຸ້ມຄ່າຫຼືບໍ່ ທຣຳ ຢືນຢັນຢ່າງໜັກແໜ້ນວ່າ “ແມ່ນແລ້ວ” ພ້ອມລະບຸວ່າ “ຕາບໃດທີ່ເປັນເລື່ອງກ່ຽວກັບສົງຄາມຄັ້ງນີ້ ຂ້ອຍກໍຈະບໍ່ປ່ຽນແນວທາງໃດໆ ທັງສິ້ນ ... ຂ້ອຍໝາຍຄວາມວ່າ ກໍພວກເຮົາບໍ່ມີທາງເລືອກອື່ນເດ”.

ທີ່ມາ: CNN

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 16 ໃນສະບັບນີ້

ຂ່າວຕ່າງປະເທດ · 16:21 ໂມງ · ອ່ານ 14 ຄັ້ງ

ສາວໄອ 26 ປີ ຕົກຈາກຊັ້ນ 7 ໂຮງແຮມເສຍຊີວິດ ຫຼັງພົ້ງຂອບປ່ອງຢ້ຽມທີ່ຫຼຸດອອກ ແມ່ຮຽກຮ້ອງຄວາມຍຸຕິທຳ



ວັນທີ 4 ພະຈິກ 2026 ສື່ນຣາຊິນລາຍງານເຫດສະຫຼົດຂອງ ເຣນາຕາ ເຣເບກາ ດອສ ຊານໂຕສ ຍິງສາວໄອ 26 ປີ ເສຍຊີວິດຫຼັງພັດຕົກຈາກຊັ້ນ 7 ຂອງໂຮງແຮມໃນເມືອງເຊົາລູອິສ ລັດມາຣັນເຍົາ.

ເຫດເກີດວັນທີ 3 ພະຈິກ ເວລາປະມານ 01:30 ນິກ ຕາມເວລາທ້ອງຖິ່ນ ຫຼື 11:30 ນິກ ຕາມເວລາໄທ ຂະນະທີ່ລາວເດີນທາງມາພັກກັບແຟນໜຸ່ມເພື່ອຮ່ວມກິດຈະກຳການແຂ່ງຂັນໂປັກເກີ. ພາບກ້ອງວົງຈອນປິດຕາມເຜີຍໃຫ້ເຫັນຍິງສາວໄວ 26 ປີ ເດີນມາພ້ອມກັບຊາຍໜຸ່ມເຊິ່ງເປັນແຟນຂອງລາວ ໂດຍມີຖ່າທາງຄ້າຍຄືນມຶນເມົາ ແລະ ເດີນເຊ ກ່ອນເອນຕົວພົ້ງຂອບປ່ອງຢ້ຽມບໍລິເວນທາງເດີນຊັ້ນ 7 ຂອງໂຮງແຮມ ຈ້ງຫວະນັ້ນຂອບປ່ອງຢ້ຽມເກີດຫຼຸດອອກ ເຮັດໃຫ້ລາວພັດຕົກລົງໄປເສຍຊີວິດ ທັງນີ້, ຍັງບໍ່ມີຜົນກວດຢືນຢັນວ່າລາວຢູ່ໃນອາການມຶນເມົາຫຼືບໍ່.

ຮ່າງຂອງລາວພັດຕົກລົງສູ່ຫຼັງຄາກັນສາດບໍລິເວນທາງເຂົ້າໂຮງແຮມ ແລະ ເສຍຊີວິດ ເຈົ້າໜ້າທີ່ຕຳຫຼວດເຂົ້າກວດສອບທີ່ເກີດເຫດ ພ້ອມນຳແຟນໜຸ່ມໄປສອບປາກຄຳກ່ອນປ່ອຍຕົວ ເນື່ອງຈາກບໍ່ພົບຫຼັກຖານວ່າລາວຊຸກ (ຍູ້) ລາວ.

ຜູ້ເສຍຊີວິດເປັນນັກສຶກສາສາຂາບໍລິຫານທຸລະກິດ ແລະ ເປັນແມ່ຂອງລູກນ້ອຍ 2 ຄົນ ການເສຍຊີວິດສ້າງຄວາມໂສກເສົ້າຢ່າງໜັກແກ່ຄອບຄົວ.

ວັນທີ 4 ພະຈິກ ຮ່າງຂອງລາວຖືກສົ່ງກັບເຖິງເມືອງເບເລັ່ງ ລັດປາຣາ ເພື່ອປະກອບພິທີໄວ້ອາໄລ ໂດຍມີຍາດຕິພີ່ນ້ອງ ແລະ ໝູ່ເພື່ອນເດີນທາງມາຮ່ວມອຳລາ.

ເບຕີ ເນເກຣາ ຜູ້ເປັນແມ່ ກ່າວທັ້ງນ້ຳຕາວ່າ ຕ້ອງການຄວາມຍຸຕິທຳໃຫ້ລູກສາວ ແລະ ຮຽກຮ້ອງໃຫ້ກວດສອບຄວາມປອດໄພຂອງໂຮງແຮມຢ່າງລະອຽດ.

ຕຳຫຼວດຢູ່ໃນລະຫວ່າງກວດສອບສະພາບປ່ອງຢ້ຽມ ແລະ ໂຄງສ້າງອາຄານ ເພື່ອຫາສາເຫດທີ່ຂອບອາລຸມິນຽມຫຼຸດອອກ ລວມເຖິງພິຈາລະນາວ່າມີຄວາມບົກພ່ອງດ້ານການບຳລຸງຮັກສາຫຼືບໍ່.

ດ້ານໂຮງແຮມສະແດງຄວາມເສຍໃຈ ແລະ ຢືນຢັນໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ຂະນະທີ່ຜົນການກວດພິສູດທາງເຕັກນິກຍັງບໍ່ແລ້ວເສຍ ແລະ ຍັງບໍ່ມີຂໍ້ສະຫຼຸບກ່ຽວກັບຜູ້ຮັບຜິດຊອບ.

ທີ່ມາ: ສື່ນຣາຊິນ

ຂ່າວຕ່າງປະເທດ · 09:57 ໂມງ · ອ່ານ 9 ຄັ້ງ

ເກີດເຫດລະເບີດໂຮງງານເຄມີຢູ່ລັດມິສຊິສຊິບປີ ສະຫະລັດ ເຈົ້າໜ້າທີ່ກູ້ໄພເລັ່ງຄວບຄຸມເຫດ ພ້ອມແຈ້ງເຕືອນປະຊາຊົນໃຫ້ຫຼີກລ່ຽງພື້ນທີ່.



ເຈົ້າໜ້າທີ່ກູ້ໄພໄດ້ເຂົ້າດຳເນີນການຫຼັງເກີດເຫດລະເບີດທີ່ໂຮງງານເຄມີໃນລັດມິສຊິສຊິບປີ ໃນວັນພຸດ ທີ 04 ພະຈິກ 2026. ສິ່ງຜົນໃຫ້ມີກຸ່ມຄວັນສີດຳຂະໜາດໃຫຍ່ລອຍຂຶ້ນສູ່ທ້ອງຟ້າ.

ໃນເວລາປະມານ 07:00 ໂມງ ຕາມເວລາທ້ອງຖິ່ນ ທີ່ໂຮງງານ ເລີຟແລນ ໂປຣດັກສ໌ (Loveland Products) ໃນເມືອງກຣີນວິລ ລັດມິສຊິສຊິບປີ ເຊິ່ງມີປະຊາກອນປະມານ 26,000 ຄົນ ຕັ້ງຢູ່ໃນເຂດສາມຫຼ່ຽມປາກແມ່ນ້ຳມິສຊິສຊິບປີ ຫ່າງຈາກເມືອງແຈັກສັນໄປທາງທິດຕາເວັນຕົກສຽງເໜືອປະມານ 193 ກິໂລແມັດ.

ທາງການເມືອງລະບຸວ່າ ເຈົ້າໜ້າທີ່ໄດ້ຮັບແຈ້ງເຫດລະເບີດທີ່ໂຮງງານ ເລີຟແລນ ໂປຣດັກສ໌ (Loveland Products) ໃນເມືອງກຣີນວິລ ຫຼັງເວລາ 07:00 ໂມງເຊົ້າ ຕາມເວລາມາດຕະຖານພາກກາງຂອງສະຫະລັດ (CST) ເລັກນ້ອຍ ຕາມຂໍ້ຄວາມຖະແຫຼງຂ່າວຂອງທາງເມືອງ.

ເມືອງກຣີນວິລຕັ້ງຢູ່ໃນເຂດສາມຫຼ່ຽມປາກແມ່ນ້ຳມິສຊິສຊິບປີ ມີປະຊາກອນປະມານ 26,000 ຄົນ ແລະ ຢູ່ຫ່າງຈາກເມືອງແຈັກສັນ ເຊິ່ງເປັນເມືອງຫຼວງຂອງລັດ ໄປທາງທິດຕາເວັນຕົກສຽງເໜືອປະມານ 193 ກິໂລແມັດ.

ທ່ານນາງ ຊາຣາ ມໍແລນ ເຮສເຕີ (Sara Moreland Hester) ຮອງຜູ້ອຳນວຍການຝ່າຍຈັດການສະພາວະສຸກເສີນເຂດວໍຊິງຕັນ ແລະເປັນນັກດັບເພີງໃນທ້ອງຖິ່ນ ກ່າວວ່າ ໃນເບື້ອງຕົ້ນຍັງບໍ່ມີລາຍງານຜູ້ບາດເຈັບ. ນາງລະບຸໃນຊ່ວງຕອນທ່ຽງວ່າ ໄຟໄໝ້ໄດ້ມອດລົງແລ້ວ ແລະນັກດັບເພີງກຳລັງສະຫຼຸບວຽກຢູ່ຈຸດເກີດເຫດ.

ຂໍ້ຄວາມຖະແຫຼງຂ່າວຂອງທາງເມືອງລະບຸວ່າ ຕາມຂໍ້ມູນເບື້ອງຕົ້ນທີ່ໄດ້ຮັບຈາກຝ່າຍບໍລິຫານໂຮງງານ ເຫດລະເບີດຄັ້ງນີ້ກ່ຽວຂ້ອງກັບໄຟໄໝ້ທີ່ເກີດຈາກສານເຄມີກຳຈັດຫຍ້າ.

ບໍລິສັດ Nutrien ເຊິ່ງເປັນບໍລິສັດແມ່ຂອງ Loveland ລະບຸວ່າ ຜູ້ບໍລິຫານໂຮງງານກຳລັງປະສານງານກັບເຈົ້າໜ້າທີ່ກູ້ໄພ. ສ່ວນບໍລິສັດ Loveland ເຊິ່ງມີສຳນັກງານໃຫຍ່ຢູ່ເມືອງເລີຟແລນ ລັດໂຄໂລຣາໂດ ເປັນຜູ້ຜະລິດປຸ໋ຍ ສານບຳລຸງພືດ ແລະຜະລິດຕະພັນປ້ອງກັນພືດຜົນທາງການກະເສດ.

ປະຊາຊົນທີ່ອາໄສຢູ່ໃກ້ໂຮງງານໄດ້ຮັບຄຳແນະນຳໃຫ້ຢູ່ພາຍໃນອາຄານ ແລະ ປິດປະຕູປ່ອງຢ້ຽມເປັນເວລາປະມານ 2 ຊົ່ວໂມງ ເນື່ອງຈາກມີຄວາມສ່ຽງຈາກຄວັນທີ່ອາດມີສານອັນຕະລາຍ. ແນວໃດກໍຕາມ ຄຳສັ່ງດັ່ງກ່າວໄດ້ຖືກຍົກເລີກກ່ອນເວລາທ່ຽງ ໃນພື້ນທີ່ຊຶມນະບົດສ່ວນໃຫຍ່ ທາງຂອບດ້ານຕາເວັນອອກຂອງເມືອງ.

ຂະນະດຽວກັນ ກົມຄຸ້ມຄອງຄຸນນະພາບສິ່ງແວດລ້ອມລັດມິສຊິສຊິບປີ ລະບຸວ່າ ທີມງານຕອບໂຕ້ເຫດສຸກເສີນ ພ້ອມດ້ວຍຜູ້ຮັບເໝົາກວດວັດຄຸນນະພາບອາກາດ ກຳລັງດຳເນີນການປະເມີນຜົນກະທົບຕໍ່ຄຸນນະພາບອາກາດຈາກເຫດການດັ່ງກ່າວ.

ທີ່ມາ: AP

ຂ່າວຕ່າງປະເທດ · 15:31 ໂມງ · ອ່ານ 8 ຄັ້ງ

ທະນາຄານຝຣັ່ງຖືກໂຈມຕີທາງໄຊເບີ ສູນເງິນກວ່າ 100 ລ້ານຢູໂຣ ພົບວິທີການຄ້າຍຄືກັບແຮກໄບແນນ



ຝຣັ່ງຍັງຖືກໂຈມຕີທາງໄຊເບີ ລ່າສຸດ ເມື່ອວານນີ້ (4 ພະຈິກ) ທະນາຄານ Crédit Mutuel Arkéa (ເຄຣດິດ ມູຕູເອລ ອາເຄຍ) ເປີດເຜີຍວ່າ ຖືກແຮກເກີເຈາະລະບົບບັນຊີທະນາຄານ ແລະ ຂໂມຍເງິນອອກໄປ ມູນຄ່າຄວາມເສຍຫາຍປະມານ 100 ລ້ານເອີໂຣ ຫຼື ປະມານ 3,700 ລ້ານບາດ.

ທະນາຄານລະບຸວ່າ ບັນຊີທີ່ໄດ້ຮັບຜົນກະທົບແມ່ນ ບັນຊີເງິນທຶນຂອງທະນາຄານເອງ ບໍ່ແມ່ນບັນຊີຂອງລູກຄ້າ ຈຶ່ງຢືນຢັນວ່າຂໍ້ມູນ ແລະ ເງິນຝາກຂອງລູກຄ້າຍັງປອດໄພ.

ລາຍງານລະບຸວ່າ ວິທີການໂຈມຕີມີຄວາມຄ້າຍຄືກັນກັບເຫດການແຮກໄບແນນ (Binance) ແພລດຟອມຊື້ຂາຍຄຣິບໂຕເຄີເຣນຊີລາຍໃຫຍ່ທີ່ສຸດຂອງໂລກ ເມື່ອວັນທີ 31 ຕຸລາ ໂດຍໜັງສືພິມ Le Monde ລາຍງານວ່າ ແຮກເກີໄດ້ເຈາະລະບົບຄອມພິວເຕີຂອງບຸກຄົນພາຍນອກທີ່ໄດ້ຮັບສິດໃຫ້ດຳເນີນການຊື້ຂາຍ ກ່ອນໃຊ້ຊ່ອງທາງດັ່ງກ່າວແຊກຊຶມເຂົ້າສູ່ລະບົບຂອງທະນາຄານ.

ຈາກນັ້ນແຮກເກີເຂົ້າເຖິງເງິນທຶນຂອງທະນາຄານ ເຊິ່ງມີເງິນຢູ່ປະມານ 10,000 ລ້ານເອີໂຣ ແລະ ຂໂມຍເງິນອອກໄປຫຼາຍກວ່າ 100 ລ້ານເອີໂຣ.

ເງິນທີ່ຖືກຂໂມຍຖືກແປງເປັນສະກຸນເງິນດິຈິຕອນ ກ່ອນກະຈາຍໄປຍັງແພລດຟອມຊື້ຂາຍຄຣິບໂຕເຄີເຣນຊີຫຼາຍແຫ່ງ ຂະນະທີ່ Kraken ແພລດຟອມຊື້ຂາຍຄຣິບໂຕເຄີເຣນຊີຂອງສະຫະລັດໆ ກວດພົບການໂອນເງິນຈຳນວນມະຫາສານທີ່ຜິດປົກກະຕິຈາກທະນາຄານແຫ່ງໜຶ່ງໃນຢູຣົບ ຈຶ່ງສົ່ງສັນຍານແຈ້ງເຕືອນເມື່ອວັນທີ 3 ພະຈິກ ແລະ ລະງັບທຸລະກຳທີ່ກຳລັງດຳເນີນການຢູ່.

ແນວໃດກໍຕາມ ລາຍງານລະບຸວ່າ ທາງທະນາຄານສາມາດສະກັດເງິນໄວ້ໄດ້ບາງສ່ວນ ແລະ ກຳລັງດຳເນີນການໃນຂັ້ນຕອນອື່ນໆ ເພື່ອນຳເງິນທີ່ເຫຼືອກັບຄືນມາ.

ຂະນະນີ້ຍັງບໍ່ສາມາດລະບຸຕົວຜູ້ກໍ່ເຫດໄດ້ຢ່າງຊັດເຈນ ແຕ່ເຫດການດັ່ງກ່າວສ້າງຄວາມກັງວົນໃຫ້ກັບແວດວົງການເງິນຂອງຝຣັ່ງ ເນື່ອງຈາກສະທ້ອນໃຫ້ເຫັນເຖິງຊ່ອງໂຫວ່ດ້ານຄວາມປອດໄພຂອງລະບົບທະນາຄານແບບດັ້ງເດີມ.

ໂດຍນັກທະນາຄານລາຍໜຶ່ງໃຫ້ສຳພາດກັບ Le Monde ວ່າ ເຫດການນີ້ເປັນສັນຍານເຕືອນຄັ້ງສຳຄັນຕໍ່ພາກການເງິນຂອງຝຣັ່ງ ແລະ ຢູຣົບທັງໝົດ ແລະ ສະແດງໃຫ້ເຫັນວ່າທະນາຄານແບບດັ້ງເດີມຍັງຄົງເຜີຍເຊີນຄວາມສ່ຽງທາງໄຊເບີຢ່າງຫຼວງຫຼາຍ.

ທີ່ມາ: Le Monde

ຂ່າວຕ່າງປະເທດ · 10:26 ໂມງ · ອ່ານ 8 ຄັ້ງ

ລະທຶກ! ເຮລິຄອບເຕີຕົກກາງອ່າວບິສເຄນ ໃກ້ເມືອງໄມອາມີສະຫະລັດ ເສຍຊີວິດ 1 ຄົນ ບາດເຈັບສາຫັດ 2 ຄົນ



ຊາຍ 1 ຄົນເສຍຊີວິດ ແລະ ອີກ 2 ຄົນໄດ້ຮັບບາດເຈັບສາຫັດ ໃນວັນພຸດ ຫຼັງຈາກເຮລິຄອບເຕີຂອງພວກເຂົາຕົກລົງໃນອ່າວບິສເຄນ (Biscayne Bay) ໃກ້ເມືອງໄມອາມີ ຕາມການເປີດເຜີຍຂອງເຈົ້າໜ້າທີ່.

ເຮລິຄອບເຕີລຸ້ນ ໂຣບິນສັນ ອາຣ໌ 44 ລຸ້ນທີ 2 ຕົກໃນຊ່ວງກ່ອນທ່ຽງວັນພຸດ ເລັກນ້ອຍ ບໍລິເວນໃກ້ສວນສາທາລະນະບິລ ແບັກສ໌ ນອກຊາຍຝັ່ງເກາະຄີ ບິສເຄນ ໃນຂະນະກຳລັງບິນຖ່າຍພາບເຮືອທີ່ແລ່ນຢູ່ໃນນ້ຳ ຕາມການລະບຸຂອງສຳນັກງານນາຍອຳເພີເມືອງໄມອາມີ-ເດດ.

ນາຍອຳເພີ ໂຣຊີ ກໍເດໂຣ-ສຕຸດສ໌ ກ່າວໃນການແຖລງຂ່າວຕອນບ່າຍວ່າ ຜູ້ລອດຊີວິດທັງ 2 ຄົນ ຖືກນຳສົ່ງໄປຍັງສູນຮັກສາຜູ້ບາດເຈັບສາຫັດໃກ້ຄຽງ ໂດຍມີອາການສາຫັດ ແຕ່ອາການຍັງຄົງທີ່.

ເຈົ້າໜ້າທີ່ກູ້ໄພຈາກຫຼາຍໜ່ວຍງານໃນທ້ອງຖິ່ນ ພ້ອມດ້ວຍໜ່ວຍຍາມຝັ່ງສະຫະລັດ ແລະໜ່ວຍງານພາສີແລະປ້ອງກັນຊາຍແດນສະຫະລັດ ໄດ້ເຂົ້າຮ່ວມປະຕິບັດການກູ້ໄພຈາກເຫດການດັ່ງກ່າວ.

ເມື່ອໜ່ວຍລາດຕະເວນທາງນ້ຳຂອງສຳນັກງານນາຍອຳເພີໄປຮອດຈຸດເກີດເຫດ ພວກເຂົາພົບພົນເມືອງດີຄົນໜຶ່ງກຳລັງພະຍາຍາມຊ່ວຍເຫຼືອຜູ້ປະສົບເຫດ ແລະ ນຳຕົວຜູ້ເຄາະຮ້າຍຄົນໜຶ່ງເຂົ້າຝັ່ງ. ຈາກນັ້ນ ເຈົ້າໜ້າທີ່ດັບເພີງເມືອງໄມອາມີໄດ້ພະຍາຍາມຊ່ວຍຊີວິດລາວ ແຕ່ບໍ່ສາມາດຊ່ວຍໄວ້ໄດ້ ຕາມການກ່າວຂອງນາຍອຳເພີຄົນດັ່ງກ່າວ.

ຂະນະດຽວກັນ ເຈົ້າໜ້າທີ່ປ້ອງກັນຊາຍແດນພົບຊາຍອີກ 2 ຄົນທີ່ຢູ່ໃນເຮລິຄອບເຕີລຳນີ້ ແລະໄດ້ສົ່ງຕໍ່ໃຫ້ທີມກູ້ໄພເມືອງໄມອາມີ-ເດດ ເພື່ອນຳສົ່ງໄປໂຮງໝໍ.

ນາຍອຳເພີກ່າວວ່າ ສາເຫດຂອງເຮືອບິນຕົກຄັ້ງນີ້ຍັງຢູ່ໃນຂັ້ນຕອນການສືບສວນ. ເຂດພາກໃຕ້ຂອງລັດຟລໍຣິດາ ປະສົບກັບຝົນຕົກໜັກໃນຫຼາຍມື້ຜ່ານມາ ແຕ່ຍັງບໍ່ມີຂໍ້ມູນຢືນຢັນວ່າສະພາບອາກາດມີສ່ວນກ່ຽວຂ້ອງກັບອຸບັດຕິເຫດຄັ້ງນີ້ຫຼືບໍ່.

ວິດີໂອຂ່າວທາງໂທລະພາບທີ່ບັນທຶກພາບເຫດການ ສະແດງໃຫ້ເຫັນເຮລິຄອບເຕີຢູ່ໃຕ້ນ້ຳໃນສະພາບປີ້ນຫົວ ໂດຍມີຖົງລອຍນ້ຳສີເຫຼືອງ 2 ອັນຕິດຢູ່ດ້ານລຸ່ມຂອງຂາລົງຈອດເຮືອບິນ. ຖົງລອຍນ້ຳສຸກເສີນເຫຼົ່ານີ້ຖືກອອກແບບມາເພື່ອຊ່ວຍໃຫ້ເຮລິຄອບເຕີສາມາດລອຍຢູ່ເທິງຜິວນ້ຳໄດ້ ເມື່ອຕ້ອງລົງຈອດໃນນ້ຳ.

ເຈົ້າໜ້າທີ່ຍັງບໍ່ໄດ້ເປີດເຜີຍຊື່ຂອງຜູ້ທີ່ຢູ່ໃນເຮລິຄອບເຕີລຳດັ່ງກ່າວ ໂດຍນາຍອຳເພີລະບຸວ່າ ພວກເຂົາຍັງກຳລັງດຳເນີນການແຈ້ງຂ່າວໃຫ້ຄອບຄົວຂອງຜູ້ປະສົບເຫດຮັບຊາບ.

ທັງນີ້ ໃນວັນອາທິດກ່ອນໜ້ານີ້ ມີຜູ້ເສຍຊີວິດ 9 ຄົນ ຫຼັງຈາກເຮືອບິນເຈັດສ່ວນຕົວ ລີເຈັດ ຕົກລົງສູ່ພື້ນດິນໃກ້ເມືອງເວສ ປາມ ບີຊ ລັດຟລໍຣິດາ ດ້ວຍແຮງກະແທກຮຸນແຮງ ຈົນເກີດເປັນຂຸມໃຫຍ່ ແລະເຮືອບິນແຕກລະອຽດ. ໂດຍຄະນະກຳມະການຄວາມປອດໄພການຂົນສົ່ງແຫ່ງຊາດສະຫະລັດ ກຳລັງສືບສວນອຸບັດຕິເຫດຄັ້ງນັ້ນເຊັ່ນກັນ.

ທີ່ມາ: ສຳນັກຂ່າວ AP

ຂ່າວຕ່າງປະເທດ · 20:50 ໂມງ · ອ່ານ 4 ຄັ້ງ

ທຶນສຳຮອງເງິນຕາຕ່າງປະເທດ ສ.ເກົາຫລີ ເຕີບໂຕລະດັບ443.160 ລ້ານໂດລາ



ສຳນັກຂ່າວ ອິນໂຟເຄວສ: ເມື່ອບໍ່ດົນມານີ້ ທະນາຄານກາງ ສ.ເກົາຫລີ (BOK) ເປີດເຜີຍວ່າ: ທຶນສຳຮອງເງິນຕາ ຕ່າງປະເທດຂອງ ສ.ເກົາຫລີ ປັບຕົວເພີ່ມຂຶ້ນ ໃນ ເດືອນທີ່ຜ່ານມາ ໂດຍໄດ້ຮັບແຮງສະໜັບສະໜູນ ຈາກການລົງທຶນໃນຊັບສິນ ຕ່າງປະເທດ ເພີ່ມຂຶ້ນລວມທັງເງິນຝາກ ສະກຸນເງິນຕາຕ່າງປະເທດ ທີ່ສະຖາບັນການເງິນ ພາຍໃນປະ ເທດ ປັບຕົວສູງຂຶ້ນ.

ໂດຍທຶນສຳຮອງ ເງິນຕາຕ່າງປະເທດລວມ ໃນທ້າຍເດືອນຕຸລາ ເພີ່ມຂຶ້ນ 2,60 ພັນລ້ານໂດລາສະຫະລັດ ເມື່ອທຽບໃສ່ເດືອນຜ່ານມາ ຫລັງຈາກຫລຸດລົງ 1,72 ຕື້ໂດລາ ສະຫະລັດ ໃນເດືອນຜ່ານມາ.

ການຟື້ນຕົວດັ່ງກ່າວ ເນື່ອງຈາກຜົນກຳໄລ ເພີ່ມຂຶ້ນ ຈາກການ ບໍລິຫານຊັບສິນ ຕ່າງປະເທດ ແລະ ການ ເຕີບໂຕຂອງເງິນຝາກ ສະກຸນເງິນຕາຕ່າງປະເທດ ທີ່ສະຖາບັນການເງິນ ພາຍໃນປະເທດ. ນອກຈາກນັ້ນ, ມູນຄ່າຫລັກຊັບຕ່າງປະເທດ ເຊັ່ນ: ພັນທະບັດລັດຖະບານ ແລະ ຫຸ້ນກູ້ເອກະຊົນ ຫລຸດລົງ 3,59 ຕື້ໂດລາສະຫະລັດ ເມື່ອທຽບເປັນລາຍເດືອນ ຈຳ ນວນ 382.430 ລ້ານໂດລາ ສະຫະລັດ ເມື່ອເດືອນຕຸລາຜ່ານມາ./

ຂ່າວຕ່າງປະເທດ · 20:05 ໂມງ · ອ່ານ 2 ຄັ້ງ

ສປ ຈີນ ມີຍອດມູນຄ່າການຄ້າຂາເຂົ້າ-ຂາອອກ ດ້ານການບໍລິການ ເພີ່ມຂຶ້ນ 8.5%



ວິທະຍຸ ໂທລະພາບ ສູນກາງຈີນ,ວັນທີ 4 ພະຈິກນີ້, ກະຊວງການຄ້າຈີນ ເປີດເຜີຍວ່າ: ໃນ 3 ໄຕມາດຂອງປີ 2026 ນີ້, ຍອດມູນຄ່າ ການຄ້າຂາເຂົ້າ-ຂາອອກ ດ້ານການບໍລິການຂອງ ສປ ຈີນ ບັນລຸເຖິງ 5.768 ຕື້ກວ່າຢວນ, ເພີ່ມຂຶ້ນ 8,5% ເມື່ອທຽບໃສ່ ໄລຍະດຽວກັນຂອງປີກາຍນີ້. ຕົວເລກສະແດງໃຫ້ເຫັນວ່າ: ໃນ 3 ໄຕ ມາດຂອງປີນີ້, ການສົ່ງອອກ ດ້ານການບໍລິການຂອງ ສປ ຈີນ ບັນລຸເຖິງ 2.271 ຕື້ກວ່າຢວນ, ເພີ່ມຂຶ້ນ 14,8% ເມື່ອທຽບໃສ່ ປີກາຍ; ການນຳເຂົ້າ ດ້ານການບໍລິການມີ 3.497 ຕື້ກວ່າຢວນ, ເພີ່ມຂຶ້ນ 4.8%. ການຂາດດຸນ ການຄ້າ ດ້ານການບໍລິການແມ່ນ 1.225 ຕື້ກວ່າຢວນ, ຫລຸດລົງ 132 ຕື້ກວ່າຢວນ ເມື່ອທຽບໃສ່ ໄລຍະດຽວກັນ ຂອງປີກາຍນີ້.ອັດຕາການເຕີບໂຕ ຂອງການຄ້າຂາເຂົ້າ-ຂາອອກ ດ້ານການບໍລິການຂົນສົ່ງ ເປັນອັນດັບທີ 1 ແລະ ການຄ້າຂາອອກ ດ້ານການບໍລິການທີ່ເນັ້ນໃສ່ ຄວາມຮູ້ສູງ ເຕີບໂຕໄວສົມຄວນ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ຂ່າວຕ່າງປະເທດ · 19:39 ໂມງ · ອ່ານ 2 ຄັ້ງ

ໂອເປັກພລັສສືບຕໍ່ຮັກສານະໂຍບາຍການຜະລິດນ້ຳມັນຕິດຕໍ່ກັນເດືອນທີສາມ



ສຳນັກຂ່າວ ອິນໂຟເຄວສ: ກຸ່ມປະເທດຜູ້ສົ່ງອອກນ້ຳມັນ ແລະ ພັນທະມິດ ຫລື ໂອເປັກພລັສ (OPEC+) ມີມະຕິສືບຕໍ່ຮັກສາ ນະໂຍບາຍ ການຜະລິດນ້ຳມັນ ສຳລັບເດືອນທັນວາ ເຊິ່ງເປັນການຮັກສາ ນະໂຍບາຍຕິດຕໍ່ກັນ ເປັນເດືອນທີສາມ ຊຶ່ງສອດຄ່ອງກັບ ຄາດການຂອງ ຕະຫລາດ.

ໂດຍສະເພາະ 7 ປະເທດສະມາຊິກ ກຸ່ມໂອເປັກພລັສ ເຊິ່ງປະກອບດ້ວຍ ອາຣັບບີ ຊາອຸດິດ; ຣັດເຊຍ;ອີຣັກ; ກຸເວດ, ກາຊັກສະຖານ;ອານເຊຣີ; ແລະ ໂອມານ ໄດ້ປະກາດ ການຕັດສິນໃຈດັ່ງກ່າວ ໃນກອງ ປະຊຸມ ຜ່ານວິດີໂອຄອນເຟີເຣນ (Video Conference) ເມື່ອວັນທີ1 ພະຈິກ ຜ່ານມາ, ເພື່ອທົບທວນພາວະ ແລະ ທ່າອຽງຕະຫລາດນ້ຳມັນໂລກ.

ຖະແຫລງການ ຂອງໂອເປັກພລັສ ລະບຸວ່າ ສະມາຊິກທັງ 7 ປະເທດ ທີ່ເຂົ້າຮ່ວມກອງປະຊຸມໄດ້ຕັດສິນໃຈຮັກສາລະດັບ ການຜະລິດນ້ຳມັນ ປະຈຳເດືອນທັນວາ ໄວ້ໃນລະ ດັບດຽວກັນ ຕາມທີ່ກຳນົດໄວ້ ໃນເດືອນກັນຍາ 2026 ພາຍໃຕ້ຂໍ້ຕົກລົງດັ່ງກ່າວ ທັງ 7 ປະເທດ ຈະຮັກສາ ລະດັບການຜະລິດ ທີ່ກຳນົດໄວ້ ລວມກັນ ທີ່ປະມານ 31,01 ລ້ານຖັງຕໍ່ວັນ ໃນເດືອນທັນວາ ໂດຍລະດັບການ ຜະລິດ ທີ່ກຳນົດຂອງ ອາຣັບບີ ຊາອຸດິດ ຈະຍັງຄົງຢູ່ທີ່ 10,48 ລ້ານຖັງຕໍ່ວັນ, ຖັດມາ ຣັດເຊຍ9,95 ລ້ານຖັງຕໍ່ວັນ ແລະ ອີຣັກ4,43 ລ້ານຖັງຕໍ່ວັນ. ນອກຈາກນີ້, ໂອເປັກພລັສ ຍັງລະບຸວ່າ ສະມາຊິກທັງ 7 ປະເທດຈະຈັດກອງປະຊຸມ ໃນຄັ້ງຕໍ່ໄປໃນວັນທີ 29 ພະຈິກ ເພື່ອທົບທວນ ພາວະ ຕະຫລາດອີກຄັ້ງ./

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

ໂຄສະນາ


EMERGING DIGITAL SOLUTIONS
ແນວຄິດ → ອອກແບບ → ເປີດໃຊ້ງານ
ຮັບອອກແບບ ແລະ ພັດທະນາ ເວັບໄຊທ์ · ແອັບ · ລະບົບທຸລະກິດ
ท่านมีแนวคิด?
พวกเราช่วยสร้างให้เป็นจริง
ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້
ອໍເດີໃໝ່ #1024 ຈາກແອັບ
app.huanlao.la/dashboard
ເຮືອນລາວ
ພາບລວມມື້ນີ້
25 ຕ.ລ. 2026
+ ເພີ່ມເມນູ
ยอดขายมื้นี้
₭ 4.250.000
12% จากมื้วาน
อำเดิ
86
ลูกค้าใหม่
12
ยอดขาย 7 มื้
ยากมีละบับ เป็นของตัวเองบ่? เฮาสร้างให้
ມື້ນີ້ກິນຫຍັງດີ?
ทั้งหมด
เฝ้
ลาบ
เกี่ยวกับ
ເຝີງົວພິເສດ
₭ 45.000
ลาบไก่
₭ 40.000
ตำหมากรุ่ง
₭ 25.000
ກະຕ່າ · 2 ລາຍການ
₭ 90.000
ສັ່ງເລີຍ
ສິ່ງທີ່ພວກເຮົາສ້າງໃຫ້ທ່ານ
ເວັບໄຊທ์ທຸລະກິດ
ເວັບແອັບ
ແອັບມືຖື
ຮ้านค้าออนลาย
ລะบบ CRM
ລะบบ ERP
ปลักอิน & API
โซลูชัน AI
ติดต่อได้เลย, ให้คำปึกสาฟรี
020 58886182
ສะแกน QR เพื่อแชัด WhatsApp · eds.la

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 22/10/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 40,230**	**▼ 34,490**	**▼ 34,040**
ແຂວງວຽງຈັນ	▼ 40,230	▼ 34,490	▼ 34,040
ຜົ້ງສາລີ	▼ 41,220	▼ 35,480	▼ 35,030
ຫຼວງນ້ຳທາ	▼ 40,720	▼ 34,990	▼ 34,530
ອຸດົມໄຊ	▼ 40,900	▼ 35,160	▼ 34,710
ບໍ່ແກ້ວ	▼ 40,330	▼ 34,590	▼ 34,140
ຫຼວງພະບາງ	▼ 40,740	▼ 35,000	▼ 34,550
ຫົວພັນ	▼ 40,740	▼ 35,000	▼ 34,550
ໄຊຍະບຸລີ	▼ 40,550	▼ 34,820	▼ 34,370
ຊຽງຂວາງ	▼ 40,430	▼ 34,680	▼ 34,230
ໄຊສົມບຸນ	▼ 40,650	▼ 34,910	▼ 34,470
ບໍລິຄຳໄຊ	▼ 40,280	34,540	▼ 34,090
ຄຳມ່ວນ	▼ 40,260	▼ 34,520	–
ສະຫວັນນະເຂດ	▼ 40,260	▼ 34,520	▼ 34,070
ສາລະວັນ	▼ 40,510	▼ 34,780	▼ 34,330
ເຊກອງ	▼ 40,510	▼ 34,770	▼ 34,330
ຈຳປາສັກ	▼ 40,290	▼ 34,550	▼ 34,100
ອັດຕະປື	▼ 40,560	▼ 34,820	▼ 34,370

ແຫຼ່ງ: ລາຍການລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (17/09)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

09/11		ວັນພຣະ
10/11		ເດືອນ 12
17/11		ວັນພຣະ
24/11		ວັນພຣະ · ບຸນນະມັດສະການ ພຣະທາດຫຼວງວຽງຈັນ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍອັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 05/11/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▼ 22,270	▼ 22,613
THB ບາດ ໄທ	▲ 667.48	▲ 680.74
CNY ຢວນ ຈີນ	▼ 3,331	▼ 3,397
EUR ເອີໂຣ	▲ 25,001	▲ 25,501
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▲ 141.35	▲ 144.15
SGD ໂດລາ ສິງກະໂປ	▲ 17,091	▲ 17,772
GBP ປອນ ອັງກິດ	▲ 29,970	▲ 30,567

ສະເລ່ຍທະນາຄານ (ທຫລ): USD ຊື້ 22,389 · ຂາຍ 22,612 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳຮູບປະພັນ 1 ບາດ

45,100,000

▼ 350,000

ຄຳແທ່ງ 99.99% · 1 ກຣາມ

3,045,000

▲ 77,400

ອັບເດດ 06/11 05:15 · mahaxan.com/today/gold

ຫວຍພັດທະນາ

ງວດ 190

ອອກວັນທີ 05/11/2026

124079

ງວດ 189 · 04/11	048808
ງວດ 188 · 03/11	145713
ງວດ 187 · 02/11	738155
ງວດ 186 · 30/10	863206

ພະຍາກອນອາກາດ

ວັນສຸກ 6 ພະຈິກ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	23.2–30.7°C	ເມກບາງສ່ວນ
ຫຼວງພະບາງ	23.2–30.2°C	ມີຝົນ
ໂພນສະຫວັນ	17.9–25.6°C	ເມກບາງສ່ວນ
ຊຳເໜືອ	19.0–24.7°C	ມີຝົນ
ສະຫວັນນະເຂດ	23.7–33.0°C	ເມກບາງສ່ວນ
ປາກເຊ	24.5–31.9°C	ແຈ່ມໃສ

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ແຈ້ງການ

ແຈ້ງການມອດໄຟ ວັນທີ 6,7,8,13/11/2026



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍ່ມີສິດ ລັດວິສາຫະກິດໄຟຟ້າລາວ
ຝ່າຍບໍລິການຈຳໜ່າຍໄຟຟ້າພາກໃຕ້
ສາຂານະຄອນຫຼວງວຽງຈັນ 1

ເລກທີ.....ຈ.ດ/ຟຟຂ.ຝຄລກ.ນວ1
ນະຄອນຫຼວງວຽງຈັນ, ວັນທີ.....

ແຈ້ງການມອດໄຟ

ເຖິງ: ຜູ້ຊົມໃຊ້ໄຟຟ້າ ຕາມບຸ້ມບ້ານ, ໂຮງຈັກ, ໂຮງງານ, ສຳນັກງານຕ່າງໆ ແລະ ເອກະຊົນເພື່ອຮັບຊາບ.

ເລື່ອງ: ຍ້ອມໄຟ 22 kV ສາຍແຈກ MSS 15.10 ສະຖານີໄຟຟ້າຖົງໄຮ່ສີ.

- ອີງຕາມກົດລະບຽບສະບັບເລກທີ 2567/ຝຄລກ.ນວ1.ຫຟຊ, ລົງວັນທີ 29/09/2023

ສາຂານະຄອນຫຼວງວຽງຈັນ 1, ຂໍຖືເປັນກຽດແຈ້ງມາຍັງຜູ້ຊົມ/ໃຊ້ໄຟຟ້າຊາບວ່າ ໃນວັນທີ 06/11/2026 ເວລາ 09:00 - 15:00 (ໃຊ້ເວລາ 6 ຊົ່ວໂມງ) ຈະໄດ້ມອດໄຟໃຫ້ ຕ້ອງການໄຟຟ້າເມືອງໃຊ(ເຂດຖາ) ເພື່ອປະຕິບັດວຽກ ຕັດຕົ້ນໄມ້ອອກຈາກແລວສາຍໄຟ, ໃນຮິຫ.ຂ ບ້ານ ຂີມສະຫງ່າ, ນາສີ່ງໃຫ, ຂາມຽບ, ແສງສະຫວ່າງ, ເມືອງ ໃຊ(ເຂດຖາ, ນະຄອນຫຼວງວຽງຈັນ. ມອດແຕ່ LBS ຂີມສະຫງ່າ. ຫາ VCB ໜ້າປໍ້ນ້ຳມັນ ປາຍ ຖົງຈອງ ຫາ LBS ຂາມອນ. ລາຍລະອຽດເຂດທີ່ມີການມອດໄຟມີດັ່ງລຸ່ມນີ້:

1. ບ້ານ ຂີມສະຫງ່າ, ບ້ານ ນາສີ່ງໃຫ
2. ບ້ານ ຂາມຽບ, ບ້ານ ແສງສະຫວ່າງ
3. ສະໜາມຍິງປືນ 5 ເມສາ
4. ຂອບເຂດ 5 ແຍກຖົງຈອງ
5. ໂຮງງານ ນ້ຳດື່ມກ້ອນຄຳ
6. ອົນຕີ້ນະຄອນຫຼວງ.
7. ອ້ານປາໜົດໜ້າໃຫ.
8. ໂຮງງານເຮ້ຍປຸ້ນເຫ້ງຂາມຽບ
9. ໂຮງງານນ້ຳດື່ມມ້ຽກອນຄຳ
10. ອ້ານອາການ ວັງປ້ຳເປັນ.
11. ໂຮງງານ ກະສິກຳໜຸນຊັບ.
12. ຟ່ານລ້ຽງໄກ່ ບ້ານຂາມຽບ.
13. ໂຮງງານ ຄອນກ້ຽ ເອ້ີ.
14. ສາງນ້ຳມັນຖົງຈອງ
15. ຕະລາດຖົງຈອງ
16. ປ້ຳນ້ຳມັນ ປາຍ ຖົງຈອງ
17. ປ້ຳນ້ຳມັນເຊື້ອໄຟລາວ
18. ໜ້ຶ່ຍປ່ອນຄົວຈ້ານອນໜ້ຶ
19. ເຮືອນພັ່ແມ່ປະຊາຊົນ, ບ້ານຍ້ຳ, ໂຮງແອມ

ແລະ ກິດຈະການອື່ນໃນບໍລິເວນຄັ້ງກ່າວ.

ໝາຍເຫດ : ຖ້າບ້ານບໍ່ຖືກຈະໄດ້ມອດໄຟຕາມໃນແຈ້ງການສະບັບນ້ຶ


ດັ່ງນ້ຶ, ຈ້ຶງຖືເປັນກຽດແຈ້ງມາຍັງຜູ້ຊົມ/ໃຊ້ໄຟຟ້າເພື່ອຮັບຊາບ ເພື່ອຫາວິທີກະກຽມ ແລະ ສ້ຳງ້ຽບໂຮກັດ ແທນໄວ້ລ່ວງໜ້ າຢ່າງດ່ີເທ່ີງກັນ ແລະ ຂໍອະໄພໃນຄວາມບໍ່ສະດວກຄ້ຶງ ນ້ຶ ດ້ວຍ.

ຜູ້ຕ້ວໜ້າສາຂານະຄອນຫຼວງວຽງຈັນ 1

ອາດສະໜາ ພັ ດ ຄຳ ພັ ນ

ໂທ: (856-21) 254121, ແຟັກ: (856-21) 254121, ອີເມວ: ...

ແຈ້ງປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ 2116/ກຄພ
ນະຄອນຫຼວງວຽງຈັນ, ວັນທີ 04 ພະຈິກ 2026

ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ ລາວ, ບໍລິສັດມີສິດນ້ຳມັນເຊື້ອໄຟ ແລະ ຜ້ຳຂາຍ ຍ່ອຍນ້ຳມັນເຊື້ອໄຟ.

ເລື່ອງ: ປັບລົງລາຄານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດ.

- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 350/ຫສນຍ, ລົງວັນທີ 18 ມີນາ 2026;
- ອີງຕາມ ແຈ້ງການ ຂອງກະຊວງການເງິນ ສະບັບເລກທີ 2400/ຫງ, ລົງວັນທີ 24 ມິຖຸນາ 2026;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການຄ້າພາຍໃນ ສະບັບເລກທີ 1999/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ທິດຊີ້ນຳຂອງກະຊວງອຸດສາຫະກຳ ແລະ ການຄ້າ ລົງວັນທີ 04 ພະຈິກ 2026;
- ອີງຕາມ ສະພາບການຜັ ນ ຜວນ ລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂ ຣ.

ເພ ື ່ ອເຮ ັ ດໃຫ ້ ການປ ັ ບລ ົ ງລາຄານ ້ ຳ ມ ັ ນເຊ ື ້ ອໄຟທ ຸ ກຊ ະ ນ ິ ດ ຂ າຍໃນປ ະ ເທ ດ ຂ ຶ ້ ນ-ລ ົ ງ ຕ າ ມ ການຜ ັ ນ ຜ ວ ນ ຂ ອ ງ ຕ ະ ຫ ຼ າ ດ ໂ ລ ກ ຢ ັ ງ ນ ້ ຶ ກ ໍ ເ ພ ື ່ ອ ຮ ັ ບ ປ ະ ກ ັ ນ ການສ ະ ໜ ອ ງ ນ ້ ຳ ມ ັ ນ ເ ຊ ື ້ ອ ໄ ຟ ໃ ຫ ້ ເ ປ ັ ນ ປ ົ ກ ກ ະ ຕ ິ .

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈ ຶ ່ ງ ໄ ດ ້ ອ ອ ກ ແ ຈ ້ ງ ການ ເ ຖ ິ ງ ທ ່ ານ ຊ າ ບ ແ ລ ະ ປ ະ ຕ ິ ບ ັ ດ ດ ັ ່ ງ ນ ້ ຶ :

1. ປ ັ ບ ລ ົ ງ ລ າ ຄ ານ ້ ຳ ມ ັ ນ ເ ຊ ື ້ ອ ໄ ຟ ຄ ື : ນ ້ ຳ ມ ັ ນ ເ ບ ັ ນ ຊ ິ ນ ສ ັ ງ ພ ິ ເ ສ ດ ປ ັ ບ ລ ົ ງ 2,060 ກ ີ ບ/ລ ິ ດ , ນ ້ ຳ ມ ັ ນ ເ ບ ັ ນ ຊ ິ ນ ສ ັ ງ ທ ຳ ມ ະ ດ າ ປ ັ ບ ລ ົ ງ 1,460 ກ ີ ບ/ລ ິ ດ ແ ລ ະ ນ ້ ຳ ມ ັ ນ ກ າ ກ ຊ ວ ນ ປ ັ ບ ລ ົ ງ 850 ກ ີ ບ/ລ ິ ດ .
ລ າ ຄ າ ດ ັ ງ ກ ล ่ า ว ແ ມ ่ ນ ล า ค า ຈ ำ ห ล ่ า ย ท ี ่ ส ถ า น ี บ ร ิ ก า ร น ้ ำ ม ั น ท ั ่ ว ป ร ะ เ ท ศ ล า ว ต ้ อ ง ป ฏ ิ บ ั ต ิ ต า ม ใ น ว ั น ท ี ่ 5 พ ฤ ศ จ ิ ก า ย น 2026 (ส ่ อ ง ล า ย ล ะ อ ี ย ด ต า ม ต า ร า ง ด ้ า น ล ่ า ง) .

ລ/ດ	ຊະນິດ	ລາຄາຂາຍຍ່ອຍ		ເພ ີ ່ ມ/ຫ ຼ ຸ ດ		ໝ າ ຍ ເ ຫ ດ
		ຫ ຼ ້ າ ສ ຸ ດ	ໃ ຫ ມ ່			
		ກ ີ ບ	ກ ີ ບ	ກ ີ ບ	%	
1	ນ ้ ำ ม ั น เ บ ั น ช ิ น ส ั ง พ ิ เ ศ ด	41,350	39,290	-2,060	4.98	
2	ນ ้ ำ ม ั น เ บ ั น ช ิ น ส ั ง ท ำ ม ะ ด า	35,570	34,110	-1,460	4.10	
3	ນ ้ ำ ม ั น ก า ก ช ว น	34,470	33,620	-850	2.47	

(ສ ຳ ລ ັ ບ ລ າ ຄ າ ຂ າ ຍ ຍ ่ อ ย แ ล ะ เ ข ต เ ศ ร ษ ฐ ก ิ จ พ ิ เ ศ ษ แ ข ว ง แ ม ่ น ม ี ล ะ ส ถ า น ี บ ร ิ ก า ร ล ้ อ ม ร ้ อ ม) .

1

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນພະຫັດ 5 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝູ່ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.